# ພຣະທັມເອັຊຣາ

1 2 3 4 5 6 7 8 9 10

## ເອັຊຣາ

## 1. ເຈົ້າຊີວິດໄຊຣັສສັ່ງໃຫ້ປະຊາຊົນອິສຣາເອນກັບຄືນນະຄອນເຢຣູຊາເລັມ

(2 ຂຄວ 36:22-23)

1 ໃນຣັຊການປີທີ່ນຶ່ງຂອງເຈົ້າໄຊຣັສ ເຈົ້າຈັກກະພັດແຫ່ງເມືອງເປີເຊັຽ ພຣະຜູ້ເປັນເຈົ້າຊົງດົນບັນດານຈິດໃຈ
ໃຫ້ພຣະອົງອອກຄຳສັ່ງແລະຂຽນຂໍ້ຄວາມນັ້ນອອກ ເພື່ອປະກາດທົ່ວທຸກທົ່ນທຸກແຫ່ງ ທົ່ວຈັກກະພົບຂອງ
ພຣະອົງ ການກະທຳດັ່ງນີ້ ກໍເພື່ອໃຫ້ຄຳທີ່ພຣະຜູ້ເປັນເຈົ້າທີ່ຊົງກ່າວຜ່ານມາທາງຜູ້ປະກາດພຣະທັມ ເຢເຣ
ມີຢາ ກາຍເປັນຄວາມຈິງ
2 ຄຳສັ່ງເຈົ້າຊີວິດໄຊຣັສແຫ່ງເປີເຊັຽມີດັ່ງນີ້ວ່າ, “ພຣະຜູ້ເປັນເຈົ້າ ພຣະເຈົ້າຜູ້ຊົງສະຖິດຢູ່ເທິງຟ້າສວັນ ຊົງໃຫ້
ຂ້າພະເຈົ້າປົກຄອງທົ່ວທັງໂລກນີ້ ແລະຊົງໃຫ້ຂ້າພະເຈົ້າຮັບຜິດຊອບສ້າງພຣະວິຫານສຳລັບພຣະອົງທີ່ນະ
ຄອນເຢຣູຊາເລັມທີ່ປະເທດຢູດາ
3 ຂໍໃຫ້ພຣະເຈົ້າສະຖິດຢູ່ທ່ານ ຜູ້ທີ່ເປັນໄພ່ພົນຂອງພຣະອົງ ພວກທ່ານຈະຕ້ອງໄປນະຄອນເຢຣູຊາເລັມທີ່ປະ
ເທດຢູດາ ເພື່ອສ້າງພຣະວິຫານຂອງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງຊາວອິສຣາເອນ ແລະພຣະເຈົ້າອົງທີ່
ຕົນນະມັສການຢູ່ນະຄອນເຢຣູຊາເລັມ
4 ຖ້າວ່າ ໄພ່ພົນຂອງພຣະອົງຄົນໃດທີ່ຢູ່ຕ່າງຖິ່ນຢາກກັບຄືນມາ ຂໍໃຫ້ຄົນບ້ານໃກ້ເຮືອນຄຽງຊ່ອຍເຫລືອພວກ
ເຂົາ ພວກເຂົາຕ້ອງຈັດຫາເງິນຄຳ ສະບຽງອາຫານ ສັດສາວາສິ່ງພ້ອມທັງເຄື່ອງຖວາຍບູຊາ ເພື່ອເປັນ
ຂອງປະທານໃຫ້ແກ່ພຣະວິຫານຂອງພຣະເຈົ້າທີ່ນະຄອນເຢຣູຊາເລັມ”
5 ແລ້ວຫົວຫນ້າຄອບຄົວຂອງຕະກູນຢູດາ ແລະຕະກູນເບັນຢາມິນ ພວກປະໂຣຫິດ ພວກເລວີພ້ອມທັງບຸກ
ຄົນທີ່ໄດ້ຮັບການດົນໃຈຈາກພຣະເຈົ້າກໍໃຫ້ພ້ອມກັນໄປສ້າງພຣະວິຫານຂອງພຣະຜູ້ເປັນເຈົ້າທີ່ນະຄອນເຢຣູ
ຊາເລັມ
6 ພວກບ້ານໃກ້ຄຽງໄດ້ຊ່ອຍເຫລືອພວກເຂົາຫລາຍສິ່ງຫລາຍຢ່າງ ເຊັ່ນວ່າ ເຄື່ອງໃຊ້ເປັນເງິນ ຄຳ ສະບຽງ
ອາຫານ ສັດສາວາສິ່ງ ສິ່ງຂອງອື່ນໆທີ່ມີຄ່າ ພ້ອມທັງເຄື່ອງຖວາຍບູຊາເພື່ອເປັນການປະທານແກ່ພຣະວິ
ຫານ
7 ເຈົ້າໄຊຣັສໄດ້ມອບຖ້ວຍ ແລະຈອກໃຫ້ພວກເຂົາ ຊຶ່ງເປັນຂອງທີ່ເຈົ້າເນບູກາດເນສຊາຣ໌ ເອົາມາຈາກນະ
ຄອນເຢຣູຊາເລັມ ແລະໄດ້ເອົາໄປໄວ້ໃນວິຫານພຣະເຈົ້າຂອງພຣະອົງ
8 ພຣະອົງໄດ້ເອົາສິ່ງຂອງເຫລົ່ານີ້ສົ່ງຄືນໃຫ້ແກ່ ມິທເຣດາດ ຫົວຫນ້າຄັງປະຈຳພຣະຣາຊວັງ ເພື່ອໃຫ້ທ່ານ
ເຮັດບັນຊີສິ່ງຂອງແລ້ວມອບໃຫ້ແກ່ ເຈົ້າເຊສບັສຊາຜູ້ປົກຄອງຢູດາ

9 ຊຶ່ງມີດັ່ງຕໍ່ລົງໄປນີ້ຄື ອ່າງຄຳສາມສິບ ອ່າງເງິນນຶ່ງພັນໃບ ມີດຊາວເກົ້າອັນ
10 ຖ້ວຍຄຳສາມສິບ ຖ້ວຍເງິນສີ່ຮ້ອຍສິບ ພາຊນະອື່ນໆນຶ່ງພັນ
11 ພາຊນະທີ່ທຳດ້ວຍຄຳແລະທຳດ້ວຍເງິນທັງສິ້ນຮວມຫ້າພັນສີ່ຮ້ອຍ ທັງຫມົດນີ້ເຈົ້າເຊສບັສຊາໄດ້ນຳຂຶ້ນມາ
ເມື່ອໄດ້ນຳພວກຊະເລີຍຂຶ້ນມາຈາກກຸງບາບີໂລນເຖິງກຸງເຢຣູຊາເລັມ

## 2. ລາຍຊື່ຊະເລີຍທີ່ກັບຄືນ

(ນຫມ 7:6-73)

1 ຕໍ່ໄປນີ້ເປັນປະຊາຊົນແຫ່ງມົນທົນທີ່ຂຶ້ນມາຈາກການເປັນຊະເລີຍໃນພວກທີ່ຖືກກວາດໄປ ຊຶ່ງເນບຸກາດເນສ
ຊາຣ໌ ພຣະຣາຊາແຫ່ງບາບີໂລນໄດ້ກວາດເອົາໄປເປັນຊະເລີຍຍັງກຸງບາບີໂລນ ແລະກັບໄປຍັງເຢຣູຊາເລັມ
ແລະຢູດາ ຕ່າງກໍໄປຍັງເມືອງຂອງຕົນ
2 ເຂົາທັງຫລາຍມາກັບເຊຣຸບບາເບນ ເຢຊູອາ ເນເຫມີ ເຊຣັຍຢາ ເຣເອລັຍຢາ ໂມເດກັຍ ບິນຊານ ມິສປາ
ບິກວັຍ ເຣຮູມ ແລະບາອານາ ຈຳນວນປະຊາຊົນອິສຣາເອນຄື
3 ເຊື້ອສາຍປາໂຣສ ສອງພັນນຶ່ງຮ້ອຍເຈັດສິບສອງຄົນ
4 ເຊື້ອສາຍເຊຟາຕີຢາ ສາມຮ້ອຍເຈັດສິບສອງຄົນ
5 ເຊື້ອສາຍອາຣາ ເຈັດຮ້ອຍເຈັດສິບຫ້າຄົນ
6 ເຊື້ອສາຍປາຮັທໂມອາບ ຄືເຊື້ອສາຍຂອງເຢຊູອາ ແລະໂຢອາບ ສອງພັນແປດຮ້ອຍສິບສອງຄົນ
7 ເຊື້ອສາຍເອລາມ ນຶ່ງພັນສອງຮ້ອຍຫ້າສິບສີ່ຄົນ
8 ເຊື້ອສາຍຊັດຕູ ເກົ້າຮ້ອຍສີ່ສິບຫ້າຄົນ
9 ເຊື້ອສາຍຊັກກັຍ ເຈັດຮ້ອຍຫົກສິບຄົນ
10 ເຊື້ອສາຍບານີ ຫົກຮ້ອຍສີ່ສິບສອງຄົນ
11 ເຊື້ອສາຍເບບັຍ ຫົກຮ້ອຍຊາວສາມຄົນ
12 ເຊື້ອສາຍອັສກາດ ນຶ່ງພັນສອງຮ້ອຍຊາວສອງຄົນ
13 ເຊື້ອສາຍອາໂດນີການ ຫົກຮ້ອຍຫົກສິບຫົກຄົນ
14 ເຊື້ອສາຍບິກວັຍ ສອງພັນຫ້າສິບຫົກຄົນ
15 ເຊື້ອສາຍອາດີນ ສີ່ຮ້ອຍຫ້າສິບສີ່ຄົນ
16 ເຊື້ອສາຍອາເຕີ ຄືເຮເຊກີຢາ ເກົ້າສິບແປດຄົນ
17 ເຊື້ອສາຍເບຊັຍ ສາມຮ້ອຍຊາວສາມຄົນ
18 ເຊື້ອສາຍໂຢຣາ ນຶ່ງຮ້ອຍສິບສອງຄົນ
19 ເຊື້ອສາຍຮາຊູມ ສອງຮ້ອຍຊາວສາມຄົນ
20 ເຊື້ອສາຍກິບບາ ເກົ້າສິບຫ້າຄົນ

21 ເຊື້ອສາຍຊາວເບັດເລເຮັມ ນຶ່ງຮ້ອຍຊາວສາມຄົນ
22 ຊາວເນໂທຟາ ຫ້າສິບຫົກຄົນ
23 ຊາວອານາໂທດ ນຶ່ງຮ້ອຍຊາວແປດຄົນ
24 ເຊື້ອສາຍອັສມາເວທ ສີ່ສິບສອງຄົນ
25 ເຊື້ອສາຍຊາວກີຣິອາດອາຣີມ ຊາວເກຟີຣາ ແລະຊາວເບເອໂຣທ ເຈັດຮ້ອຍສີ່ສິບສາມຄົນ
26 ເຊື້ອສາຍຊາວຣາມາ ແລະຊາວເກບາ ຫົກຮ້ອຍຊາວເອັດຄົນ
27 ຊາວມິກມັສ ນຶ່ງຮ້ອຍຊາວສອງຄົນ
28 ຊາວເບັດເອນ ແລະຊາວອາອີ ສອງຮ້ອຍຊາວສາມຄົນ
29 ເຊື້ອສາຍຊາວເນໂບ ຫ້າສິບສອງຄົນ
30 ເຊື້ອສາຍຊາວມັກບິສ ນຶ່ງຮ້ອຍຫ້າສິບຫົກຄົນ
31 ເຊື້ອສາຍເອລາມອີກຄົນນຶ່ງ ນຶ່ງພັນສອງຮ້ອຍຫ້າສິບສີ່ຄົນ
32 ເຊື້ອສາຍຊາວຮາຣີມ ສາມຮ້ອຍຊາວຄົນ
33 ເຊື້ອສາຍຊາວໂລດ ຊາວຮາດິດ ແລະຊາວໂອໂນ ເຈັດຮ້ອຍຊາວຫ້າຄົນ
34 ເຊື້ອສາຍຊາວເຢຣີໂກ ສາມຮ້ອຍສີ່ສິບຫ້າຄົນ
35 ເຊື້ອສາຍເຊເນອາສາມພັນຫົກຮ້ອຍສາມສິບຄົນ
36 ບັນດາປະໂຣຫິດຄື ເຊື້ອສາຍເຢດັຍຢາ ຕະກູນເຢຊູອາ ເກົ້າຮ້ອຍເຈັດສິບສາມຄົນ
37 ເຊື້ອສາຍອິມເມີ ນຶ່ງພັນຫ້າສິບສອງຄົນ
38 ເຊື້ອສາຍປັສເຮີ ນຶ່ງພັນສອງຮ້ອຍສີ່ສິບເຈັດຄົນ
39 ເຊື້ອສາຍຮາຣີມ ນຶ່ງພັນສິບເຈັດຄົນ
40 ຄົນເລວີ ຄືເຊື້ອສາຍເຢຊູອາ ແລະກັດມີເອນ ຝ່າຍເຊື້ອສາຍໂຮດາວີຢາ ເຈັດສິບສີ່ຄົນ
41 ພວກນັກຮ້ອງ ຄືເຊື້ອສາຍອາສາຟ ນຶ່ງຮ້ອຍຊາວແປດຄົນ
42 ເຊື້ອສາຍຄົນເຝົ້າປະຕູ ຄືເຊື້ອສາຍຊັນລູມ ເຊື້ອສາຍອາເຕີ ເຊື້ອສາຍຕັນໂມນ ເຊື້ອສາຍອັກກູບ ເຊື້ອສາຍຮາຕີຕາ ແລະເຊື້ອສາຍໂຊບັຍ ຮວມກັນ ນຶ່ງຮ້ອຍສາມສິບເກົ້າຄົນ
43 ຄົນໃຊ້ປະຈຳພຣະວິຫານ ຄືເຊື້ອສາຍຊີຮາ ເຊື້ອສາຍຮາຊູຟາ ເຊື້ອສາຍຕັບບາໂອທ
44 ເຊື້ອສາຍເກໂຣສ ເຊື້ອສາຍຊີອາຮາເຊື້ອສາຍປາໂດນ
45 ເຊື້ອສາຍເລບານາ ເຊື້ອສາຍຮາກາບາ ເຊື້ອສາຍອັກກູບ
46 ເຊື້ອສາຍຮາກາບ ເຊື້ອສາຍຊາມລັຍ ເຊື້ອສາຍຮານານ
47 ເຊື້ອສາຍກິດເດນ ເຊື້ອສາຍກາຮາ ເຊື້ອສາຍເຣອາຢາ
48 ເຊື້ອສາຍເຣຊີນ ເຊື້ອສາຍເນໂກດາ ເຊື້ອສາຍກັສຊາມ
49 ເຊື້ອສາຍອູສຊາ ເຊື້ອສາຍປາເຊອາ ເຊື້ອສາຍເບຊັຍ

50 ເຊື້ອສາຍອັສນາ ເຊື້ອສາຍເມອູນິມ ເຊື້ອສາຍເນຟີຊິມ

51 ເຊື້ອສາຍບັກບຸກ ເຊື້ອສາຍຮາກູຟາ ເຊື້ອສາຍຮາຮູ

52 ເຊື້ອສາຍບັສລູທ ເຊື້ອສາຍເມຮີດາ ເຊື້ອສາຍຮາຊາ

53 ເຊື້ອສາຍບາໂກສ ເຊື້ອສາຍຊີເຊຣາ ເຊື້ອສາຍເຕມາ

54 ເຊື້ອສາຍເນຊີຢາ ແລະເຊື້ອສາຍຮາຕີຟາ

55 ເຊື້ອສາຍຂ້າຣາຊການຂອງໂຊໂລໂມນ ຄືເຊື້ອສາຍໂຊຕັຍ ເຊື້ອສາຍຮັສໂຊເຟເຣທ ເຊື້ອສາຍເປຣູດາ

56 ເຊື້ອສາຍຢາອາລາ ເຊື້ອສາຍດາໂກນ ເຊື້ອສາຍກິດເດນ

57 ເຊື້ອສາຍເຊຟາຕີຢາ ເຊື້ອສາຍຮັດຕິນ ເຊື້ອສາຍໂປເຄເຣັດຮັສເຊບາອິມ ແລະເຊື້ອສາຍອາມີ

58 ຄົນໃຊ້ປະຈຳພຣະວິຫານ ແລະເຊື້ອສາຍຂອງຂ້າຣາຊການຂອງໂຊໂລໂມນທັງຫມົດເປັນສາມຮ້ອຍເກົ້າສິບສອງຄົນ

59 ຕໍ່ໄປນີ້ເປັນບັນດາຜູ້ທີ່ຂຶ້ນມາຈາກເຕນເມລາ ເຕນຮາຊາ ເຄຣຸບ ອັດດານ ແລະອິມເມີ ແມ້ເຂົາຈະພິສູດຕະກູນຂອງເຂົາຫລືເຊື້ອສາຍຂອງເຂົາບໍ່ໄດ້ ວ່າເຂົາເປັນຄົນອິສຣາເອນຫລືບໍ່ ຄື

60 ເຊື້ອສາຍເດລັຍຢາ ເຊື້ອສາຍໂຕບີຢາ ເຊື້ອສາຍເນໂກດາ ຮວມຫົກຮ້ອຍຫ້າສິບສອງຄົນ

61 ແລະຈາກເຊື້ອສາຍປະໂຣຫິດດ້ວຍ ຄືເຊື້ອສາຍຮາບາຢາ ເຊື້ອສາຍຮັກໂກສ ແລະເຊື້ອສາຍບາຊີນລັຍ (ຜູ້ໄດ້ເມັຽຈາກທິດາຂອງບັນຊີນລັຍ ຄົນກີເລອາດຈຶ່ງໄດ້ຊື່ຕາມນັ້ນ)

62 ຄົນເຫລົ່ານີ້ເມື່ອຄົ້ນຫາຊື່ໃນທະບຽນທີ່ເຂົາຂຶ້ນໄວ້ໃນສຳມະໂນຄົວເຊື້ອສາຍກໍບໍ່ພົບ ຈຶ່ງຖືວ່າເປັນຄົນສາມັນແລະຖືກຕັດອອກຈາກພວກປະໂຣຫິດ

63 ຜູ້ວ່າຣາຊການເມືອງສັ່ງເຂົາບໍ່ໃຫ້ຮັບອາຫານບໍຣິສຸດທີ່ສຸດຈົນກວ່າຈະມີປະໂຣຫິດທີ່ຈະປຶກສາກັບ ອູຣິມແລະທູມມິມເສັຽກ່ອນ

64 ຊຸມນຸມຊົນທັງຫມົດຮວມກັນມີສີ່ຫມື່ນສອງພັນສາມຮ້ອຍຫົກສິບຄົນ

65 ນອກເຫນືອຈາກຄົນໃຊ້ຊາຍຍິງຊຶ່ງມີຢູ່ເຈັດພັນສາມຮ້ອຍສາມສິບເຈັດຄົນ

66 ມ້າຂອງເຂົາມີເຈັດຮ້ອຍສາມສິບຫົກໂຕ ລໍສອງຮ້ອຍສີ່ສິບຫ້າໂຕ

67 ອູດຂອງເຂົາສີ່ຮ້ອຍສາມສິບຫ້າໂຕ ແລະລາຂອງເຂົາຫົກພັນເຈັດຮ້ອຍຊາວໂຕ

68 ຫົວຫນ້າຄອບຄົວບາງຄົນ ເມື່ອເຂົາມາເຖິງທີ່ພຣະວິຫານຂອງພຣະຜູ້ເປັນເຈົ້າ ຊຶ່ງຢູ່ໃນເຢຣູຊາເລັມໄດ້ຖວາຍຕາມໃຈສມັກເພື່ອພຣະວິຫານຂອງພຣະເຈົ້າ ເພື່ອຈະສ້າງພຣະວິຫານຂຶ້ນໃນທີ່ເດີມ

69 ເຂົາຖວາຍຕາມກຳລັງຂອງເຂົາແກ່ກອງທັບເພື່ອພຣະຣາຊກິຈ ເປັນທອງຄຳຫົກຫມື່ນນຶ່ງພັນດາຣິກ ເງິນຫ້າພັນມີນັສ ແລະເຄື່ອງແຕ່ງກາຍປະໂຣຫິດນຶ່ງຮ້ອຍໂຕ

70 ບັນດາປະໂຣຫິດ ຄົນເລວີ ແລະປະຊາຊົນສ່ວນນຶ່ງອາໄສໃນເຢຣູຊາເລັມ ແລະທີ່ບໍຣິເວນອ້ອມຮອບ ແລະນັກຮ້ອງຄົນເຝົ້າປະຕູ ແລະຄົນໃຊ້ປະຈຳພຣະວິຫານຢູ່ຕາມເມືອງຂອງຕົນ ແລະອິສຣາເອນທັງປວງຢູ່ຕາມເມືອງຂອງເຂົາ

# 3. ອິສຣາເອນເລີ້ມຕົ້ນນະມັສການພຣະເຈົ້າທີ່ ເຢຣູຊາເລັມ

1 ຕໍ່ມາໃນເດືອນທີ່ເຈັດ ຊາວອິສຣາເອນກໍໄດ້ຕັ້ງຖິ່ນຖານຢູ່ຕາມບ້ານເມືອງຂອງເຂົາ ແລ້ວທຸກໆຄົນໄດ້ໂຮມ
ກັນທີ່ກຸງເຢຣູຊາເລັມ
2 ເຢຊູອາລູກຊາຍຂອງເຢຊາດັກ ພ້ອມດ້ວຍຫມູ່ເພື່ອນທີ່ເປັນປະໂຣຫິດ ເຊຣຸບບາເບນລູກຊາຍຂອງເຊອັນທີ
ເອນພ້ອມທັງຍາດຕິພີ່ນ້ອງໄດ້ພາກັນສ້າງແທ່ນບູຊາສຳລັບພຣະເຈົ້າຂອງອິສຣາເອນ ເພື່ອພວກເຂົາຈະໄດ້
ຖວາຍເຄື່ອງບູຊາຕາມຄຳແນະນຳທີ່ຂຽນໄວ້ໃນພຣະທັມຂອງໂມເຊຄົນຂອງພຣະເຈົ້າ
3 ເຖິງແມ່ນວ່າພວກເຂົາຢ້ານຊົນຊາດອື່ນທີ່ອາໄສໃນປະເທດນັ້ນກໍຕາມ ພວກເຂົາກໍຍັງຕັ້ງແທ່ນບູຊາໄວ້ບ່ອນ
ເກົ່າຂອງມັນເອງທຸກໆເຊົ້າແລະແລງ ພວກເຂົາໄດ້ເຜົາຖວາຍບູຊາຢູ່ເທິງແທ່ນບູຊານັ້ນເປັນປະຈຳ
4 ພວກເຂົາທຳພິທີວັນສະຫລອງຢູ່ຕູບຕາມທີ່ບັນທຶກໄວ້ ແລະຖວາຍເຄື່ອງເຜົາບູຊາປະຈຳວັນຕາມຈຳນວນທີ່
ກຳນົດໄວ້ໃນແຕ່ລະມື້
5 ນອກຈາກນີ້ພວກເຂົາຍັງໄດ້ຖວາຍເຄື່ອງເຜົາບູຊາໃຫ້ສມ່ຳສເມີ ທັງເຄື່ອງຖວາຍບູຊາໃນວັນເດືອນອອກ
ໃຫມ່ ທັງທຸກສິ່ງທີ່ກຳນົດໄວ້ໃນເທສການທີ່ພຣະຜູ້ເປັນເຈົ້າຊົງກຳນົດໄວ້ ແລະຖວາຍເຄື່ອງບູຊາຕາມໃຈສ
ມັກຂອງຕົນ ປະຊາຊົນຍັງບໍ່ທັນຕັ້ງຕົ້ນສ້າງພຣະວິຫານ
6 ແຕ່ໃນມື້ທຳອິດຂອງເດືອນເຈັດນັ້ນ ພວກເຂົາຍັງເລີ້ມຕົ້ນຖວາຍເຄື່ອງບູຊາແກ່ພຣະຜູ້ເປັນເຈົ້າຢູ່
7 ປະຊາຊົນໄດ້ຈ່າຍເງິນໃຫ້ແກ່ຊ່າງກໍ່ຫີນ ຊ່າງໄມ້ ແລະໄດ້ເອົາອາຫານ ເຄື່ອງດື່ມ ນ້ຳມັນຫມາກກອກແກ່
ຄົນຊີໂດນ ແລະຄົນຕີໂຣ ເພື່ອໃຫ້ນຳໄມ້ສົນຈາກເມືອງເລບານອນໄປເຖິງທະເລ ເຖິງເມືອງໂຢບຟາຕາມທີ່
ເຂົາໄດ້ຮັບອະນຸຍາດມາຈາກເຈົ້າຊີວິດໄຊຣັສແຫ່ງເປີເຊັຽ

### ອິສຣາເອນລົງມືສ້າງພຣະວິຫານ

8 ໃນເດືອນທີ່ສອງຂອງປີທີສອງ ຫລັງຈາກກັບມາຮອດກຸງເຢຣູຊາເລັມບ່ອນທີ່ມີພຣະວິຫານຂອງພຣະຜູ້ເປັນ
ເຈົ້າແລ້ວ ພວກເຂົາໄດ້ລົງມືເຮັດວຽກ ເຊຣຸບບາເບນ ເຢຊູອາພ້ອມທັງພວກຍູດາອື່ນໆອີກຄື ພວກປະໂຣ
ຫິດ ແລະພວກເລວີໄດ້ມາຮ່ວມເຮັດວຽກນຳ ຕາມຄວາມຈິງທຸກຄົນທີ່ມາຈາກບາບີໂລນໄດ້ຊ່ອຍໃນວຽກນີ້
ຫມົດ ຊາວເລວີທີ່ມີອາຍຸຊາວປີຂຶ້ນໄປໄດ້ບັນຈຸເຂົ້າເປັນຜູ້ດູແລວຽກການຢູ່ໃນພຣະວິຫານ
9 ດັ່ງນັ້ນ ໂຢຊວຍຄົນເລວີພ້ອມທັງບຸດຊາຍແລະຍາດຕິພີ່ນ້ອງ ກັດມີເອນພ້ອມທັງບຸດຊາຍຄືຄອບຄົວຂອງ
ໂຮດາວິອາ ໄດ້ດູແລວຽກການຢູ່ໃນພຣະວິຫານ ຊາວເລວີໃນຕະກູນເຮນາດັດໄດ້ຊ່ອຍວຽກການນີ້ຄືກັນ
10 ເມື່ອພວກເຂົາເລີ້ມຕົ້ນວາງຮາກຖານພຣະວິຫານ ພວກປະໂຣຫິດຢູ່ໃນຊຸດເສື້ອຍ່າມຖືແກຢືນປະຈຳບ່ອນ
ສ່ວນພວກເລວີທີ່ເປັນຄອບຄົວດຽວກັນກັບອາສາຟໄດ້ຖືຊິງຢືນຢູ່ບ່ອນນັ້ນ ພວກເຂົາສັຣເສີນພຣະຜູ້ເປັນເຈົ້າ
ຕາມຄຳແນະນຳຂອງກະສັດດາວິດ

11 ພວກເຂົາພາກັນຮ້ອງເພງສັຣເສີນພຣະຜູ້ເປັນເຈົ້າໂດຍຫລຳໄປຫລຳມາວ່າ, "ພຣະຜູ້ເປັນເຈົ້າ ຊົງປະກອບດ້ວຍຄວາມດີ ຄວາມຮັກຂອງພຣະອົງຊົງມີຕໍ່ພວກອິສຣາເອນຕລອດໄປ" ທຸກໆຄົນໄດ້ຮ້ອງເພງສັຣເສີນພຣະຜູ້ເປັນເຈົ້າດ້ວຍຄວາມສຸດອົກສຸດໃຈ ເພາະວ່າຮາກຖານຂອງພຣະວິຫານໄດ້ຕັ້ງຂຶ້ນແລ້ວ

12 ແຕ່ມີພວກປະໂຣຫິດອະວຸໂສ ແລະພວກເລວີບາງຄົນ ທັງພວກຫົວຫນ້າຄອບຄົວບາງຄົນທີ່ໄດ້ເຄີຍເຫັນພຣະວິຫານຕັ້ງທຳອິດກໍພາກັນຮ້ອງໄຫ້ຄ່ຳຄວນ ພວກຄົນອື່ນໆທີ່ຢູ່ບ່ອນນັ້ນພາກັນຮ້ອງໂຮ່ຍິນດີ ໃນຂນະທີ່ພວກເຂົາຄອຍຖ້າເບິ່ງຮາກຖານພຣະວິຫານຕັ້ງຂຶ້ນນັ້ນ

13 ບໍ່ມີໃຜສັງເກດຮູ້ໄດ້ໃນລະຫວ່າງການຮ້ອງຍິນດີ ແລະການຮ້ອງໄຫ້ ເພາະວ່າມັນດັງໂພດ ແລະສຽງນັ້ນກໍໄດ້ຍິນໄປຫລາຍຫລັກ

## 4. ປໍຣະປັກຍັບຍັ້ງງານ

1 ເມື່ອປໍຣະປັກຂອງຢູດາແລະເບັນຢາມິນໄດ້ຍິນວ່າພວກທີ່ຖືກກວາດໄປເປັນຊະເລີຍໄດ້ກັບມາ ກຳລັງສ້າງພຣະວິຫານຖວາຍແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງອິສຣາເອນ

2 ເຂົາທັງຫລາຍໄດ້ເຂົ້າມາຫາເຊຣຸບບາເບນ ແລະຫົວຫນ້າຂອງຕະກູນແລະເວົ້າກັບເຂົາວ່າ, "ໃຫ້ເຮົາສ້າງດ້ວຍກັນກັບທ່ານ ເພາະວ່າພວກເຮົານະມັສການພຣະເຈົ້າຂອງທ່ານຢ່າງທ່ານທັງຫລາຍ ແລະເຮົາໄດ້ຖວາຍສັຕບູຊາແກ່ພຣະອົງ ຕັ້ງແຕ່ວັນທີ່ເອຊາຮັດໂດນພຣະຣາຊາແຫ່ງອັສຊີເຣັຽໄດ້ນຳເຮົາມາທີ່ນີ້

3 ແຕ່ເຊຣຸບບາເບນ ເຢຊູອາ ແລະຄົນອື່ນໆທີ່ເປັນພວກຫົວຫນ້າຂອງຕະກູນທີ່ເຫລືອຢູ່ໃນອິສຣາເອນເວົ້າກັບເຂົາທັງຫລາຍວ່າ, "ທ່ານທັງຫລາຍບໍ່ມີສ່ວນກັບເຮົາໃນການສ້າງພຣະວິຫານຖວາຍແດ່ພຣະເຈົ້າຂອງເຮົາແຕ່ພວກເຮົາຈະສ້າງແຕ່ລຳພັງຖວາຍແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງອິສຣາເອນຕາມທີ່ກະສັດໄຊຣັສພຣະຣາຊາແຫ່ງເປີເຊັຽຊົງບັນຊາໄວ້ແກ່ເຮົາ"

4 ແລ້ວປະຊາຊົນແຫ່ງແຜ່ນດິນນັ້ນໄດ້ກະທຳໃຫ້ປະຊາຊົນຢູດາທໍ້ຖອຍ ແລະກະທຳໃຫ້ເຂົາຢ້ານທີ່ຈະສ້າງ

5 ແລະໄດ້ຈ້າງທີ່ປຶກສາໄວ້ຂັດຂວາງເຂົາບໍ່ໃຫ້ເຂົາສົມຫວັງຕາມຈຸດປະສົງຂອງເຂົາ ຕລອດຣັຊສະໄຫມຂອງໄຊຣັສ ພຣະຣາຊາແຫ່ງເປີເຊັຽ ຈົນເຖິງຣັຊສະໄຫມຂອງດາຣິອຸສພຣະຣາຊາແຫ່ງເປີເຊັຽ

6 ແລະໃນຣັຊການອາຣາຊູເອຣັສ ຕົ້ນຣັຊການຂອງພຣະອົງ ເຂົາທັງຫລາຍໄດ້ຂຽນຟ້ອງຊາວຢູດາ ແລະເຢຣູຊາເລັມ

7 ແລະໃນຣັຊສະໄຫມຂອງອາຕາເຊີຊີສນັ້ນ ບີສລາມ ແລະມິທເຣດາດ ແລະທາເບເອນ ແລະພວກຜູ້ຮ່ວມງານທັງຫມົດຂອງເຂົາໄດ້ຂຽນໄປທູນອາຕາເຊີເຊສພຣະຣາຊາແຫ່ງເປີເຊັຽ ຈົດຫມາຍນີ້ໄດ້ຂຽນຂຶ້ນເປັນອັກສອນອາຣາມແລ້ວກໍແປເປັນພາສາອາຣາມ

8 ເຣຮູມຜູ້ບັງຄັບບັນຊາ ແລະຊິມຊັຍເລຂາທິການໄດ້ຂຽນຫນັງສືປັກປຳເຢຣູຊາເລັມຖວາຍອາຕາເຊີເຊສພຣະຣາຊາດັ່ງຕໍ່ໄປນີ້

9 ແລ້ວເຣຮູມຜູ້ບັງຄັບບັນຊາ ຊິມຊັຍເລຂາທິການ ກັບຜູ້ຮ່ວມງານຂອງທ່ານ ແລະບັນດາຜູ້ພິພາກສາ ພວກ
ທູດ ຂ້າຣາຊການ ຊາວເປີເຊັຽ ຄົນເອເຣກ ຊາວບາບີໂລນ ຊາວຊູຊາ ຄືຄົນເອລາມ
10 ແລະຄົນຂອງປະຊາຊາດອື່ນໆ ຜູ້ຊຶ່ງໂອສນັປປາ ເຈົ້ານາຍຜູ້ໃຫຍ່ໄດ້ສົ່ງມາໃຫ້ຕັ້ງຢູ່ໃນຫົວເມືອງຊາມາເຣັຽ
ແລະໃນສ່ວນທີ່ເຫລືອຂອງມົນທົນທາງຟາກແມ່ນໍ້າຂ້າງຕາເວັນຕົກ
11 ແລະນີ້ເປັນສຳເນົາຈົດຫມາຍທີ່ເຂົາສົ່ງໄປວ່າ, “ກາບທູນອາຕາເຊີເຊສພຣະຣາຊາ ຂ້າຣາຊການຂອງພຣະ
ອົງ ຄືຄົນຂອງມົນທົນຟາກແມ່ນໍ້າຂ້າງຕາເວັນຕົກ
12 ບັດນີ້ຂໍພຣະຣາຊາຊົງຊາບວ່າ ພວກຢິວຊຶ່ງມາຈາກພຣະອົງ ມາຫາຂ້າພຣະອົງນັ້ນໄດ້ໄປຍັງເຢຣູຊາເລັມ
ເຂົາກຳລັງກໍ່ສ້າງເມືອງທີ່ມັກກະບົດ ແລະຊົ່ວຮ້າຍຂຶ້ນໃຫມ່ ເຂົາກຳລັງຈະທຳກຳແພງເມືອງແລ້ວແລະຊ່ອມ
ແຊມຣາກຖານ
13 ບັດນີ້ຂໍພຣະຣາຊາຊົງຊາບວ່າ ຖ້າເມືອງນີ້ໄດ້ສ້າງຂຶ້ນໃຫມ່ແລະກຳແພງເມືອງສຳເຣັດ ເຂົາຈະບໍ່ສົ່ງບັນນາ
ການ ຄ່າທັມນຽມ ຫລືຄ່າພາສີ ແລະເງິນລາຍໄດ້ຂອງຫລວງກໍຈະຂາດຕົກບົກພ່ອງໄປ
14 ເພາະເມື່ອຂ້າພຣະອົງໄດ້ສາບານວ່າຈະພັກດີຕໍ່ຣາຊບັນລັງ ຈຶ່ງບໍ່ສົມຄວນທີ່ຂ້າພຣະອົງທັງຫລາຍຈະເຫັນ
ການເສື່ອມກຽດຂອງພຣະຣາຊາ ເພາະສະນັ້ນຂ້າພຣະອົງທັງຫລາຍຈຶ່ງສົ່ງມາກາບທູນແກ່ພຣະຣາຊາ
15 ເພື່ອວ່າຈະໄດ້ຄົ້ນດູໃນຫນັງສືບັນທຶກຂອງບັນພະບຸຣຸດຂອງພຣະອົງ ພຣະອົງຈະພົບໃນຫນັງສືບັນທຶກວ່າ
ເມືອງນີ້ເປັນເມືອງມັກກະບົດ ເປັນໄພອັນຕະຣາຍໃຫ້ແກ່ບັນດາພຣະຣາຊາແລະມົນທົນທັງຫລາຍ ແລະໄດ້
ມີການປຸກປັ່ນຂຶ້ນຈາກສະໄຫມເກົ່າກ່ອນ ເພາະເຫດນີ້ເອງເມືອງນີ້ຈຶ່ງຖືກທຳລາຍ
16 ຂ້າພຣະອົງທັງຫລາຍຂໍກາບທູນໃຫ້ພຣະຣາຊາຊົງຊາບວ່າ ຖ້າເມືອງນີ້ໄດ້ສ້າງໃຫມ່ເສັດ ແລະກຳແພງ
ເມືອງກໍສ◌ຳເຣັດແລ້ວ ພຣະອົງຈະບໍ່ມີກຳມະສິດໃນມົນທົນຟາກແມ່ນໍ້າຂ້າງຕາເວັນຕົກ”
17 ພຣະຣາຊາຊົງສົ່ງພຣະຣາຊສານຕອບໄປວ່າ, “ເຖິງເຣຮູມຜູ້ບັງຄັບບັນຊາແລະຊິມຊັຍເລຂາທິການ ແລະຜູ້
ຮ່ວມງານທັງປວງຂອງເຂົາຜູ້ອາໄສໃນຊາມາເຣັຽ ແລະໃນສ່ວນທີ່ເຫລືອຂອງມົນທົນທາງຟາກແມ່ນໍ້າຂ້າງ
ຕາເວັນຕົກ ຂໍຄຳນັບມາ
18 ບັດນີ້ຫນັງສືທີ່ທ່ານສົ່ງໄປຍັງເຮົາໄດ້ໃຫ້ແປຕໍ່ຫນ້າເຮົາ
19 ແລະເຮົາໄດ້ອອກຄຳສັ່ງ ແລະໄດ້ສອບສວນແລ້ວ ເຫັນວ່າເມືອງນີ້ແຕ່ກ່ອນນັ້ນໄດ້ລຸກຂຶ້ນຕໍ່ສູ້ພຣະຣາຊາ
ແລະການກະບົດແລະການປຸກປັ່ນໄດ້ເກີດຂຶ້ນໃນເມືອງນັ້ນ
20 ເຄີຍມີກະສັດຜູ້ຊົງອຳນາດໄດ້ຄອງເຢຣູຊາເລັມ ເປັນຜູ້ຊົງປົກຄອງມົນທົນທັງສິ້ນຟາກແມ່ນໍ້າຂ້າງຕາເວັນ
ຕົກຊຶ່ງເຂົາຖວາຍບັນນາການ ຄ່າທັມນຽມແລະພາສີໃຫ້
21 ເພາະສະນັ້ນທ່ານທັງຫລາຍຈົ່ງອອກຄຳສັ່ງວ່າ ໃຫ້ຄົນເຫລົ່ານີ້ຢຸດ ແລະບໍ່ຕ້ອງເຮັດສ້າງເມືອງນີ້ໃຫມ່ ຈົນ
ກວ່າເຮົາຈະອອກຄຳສັ່ງໃຫມ່
22 ແລະຂໍລະວັງຢ່າຢ່ອນໃນເຣື່ອງນີ້ ເປັນຫຍັງຈະໃຫ້ຄວາມເສື່ອມເສັຽເກີດຂຶ້ນເປັນໄພອັນຕະຣາຍຕໍ່ພຣະຣາ
ຊາ”

23 ແລ້ວເມື່ອໄດ້ອ່ານສຳເນົາຣາຊສານຂອງກະສັດອາຕາເຊີເຊສຕໍ່ຫນ້າເຣຮູມແລະຊີມຊັຍເລຂາ ແລະຜູ້ຮ່ວມງານທັງຫລາຍຂອງທ່ານ ທ່ານທງັຫລາຍກໍຮີບໄປຫາຢິວທີ່ເຢຣູຊາເລັມ ແລະໃຊ້ກຳລັງແລະອຳນາດກະທຳໃຫ້ເຂົາຢຸດ

24 ງານພຣະວິຫານແຫ່ງພຣະເຈົ້າ ຊຶ່ງຢູ່ໃນເຢຣູຊາເລັມຈຶ່ງຢຸດຈົນເຖິງປີທີ່ສອງແຫ່ງຣັຊການດາຣິອຸສພຣະຣາຊາແຫ່ງເປີເຊັຽ

## 5. ສ້າງພຣະວິຫານຂຶ້ນໃຫມ່

**(ຣກຍ 1:1; ຊຄຢ 1:1)**

1 ຝ່າຍຜູ້ປະກາດພຣະທັມ ມີຮັກກັຍ ແລະເຊຄາຣີຢາບຸດອິດໂດ ໄດ້ພຍາກອນແກ່ພວກຢິວຜູ້ຢູ່ໃນຢູດາແລະເຢຣູຊາເລັມໃນພຣະນາມຂອງພຣະເຈົ້າແຫ່ງອິສຣາເອນ

2 ແລ້ວເຊຣຸບບາເບນບຸດເຊອັນທິເອນແລະເຢຊູອາບຸດໂຢຊາດັກໄດ້ລຸກຂຶ້ນຕັ້ງຕົ້ນສ້າງພຣະວິຫານແຫ່ງພຣະເຈົ້າຊຶ່ງຢູ່ໃນເຢຣູຊາເລັມຂຶ້ນໃຫມ່ ແລະຜູ້ປະກາດພຣະທັມຂອງພຣະເຈົ້າໄດ້ຢູ່ກັບທ່ານຊ່ອຍເຫລືອທ່ານ

3 ໃນເວລາດຽວກັນນັ້ນຕັທເຫນັຍ ຜູ້ວ່າຣາຊການມົນທົນຟາກແມ່ນ້ຳຂ້າງຕາເວັນຕົກ ແລະເຊທາໂບເຊນັຍ ແລະຄນະຂອງເຂົາໄດ້ມາຫາທ່ານ ແລະເວົ້າກັບທ່ານດັ່ງນີ້ວ່າ, “ຜູ້ໃດທີ່ສັ່ງໃຫ້ພວກເຈົ້າສ້າງພຣະວິຫານແລະໂຄງຮ່າງນີ້ຈົນສຳເຣັດ”

4 ເຂົາຖາມທ່ານຢ່າງນີ້ດ້ວຍວ່າ, “ຜູ້ທີ່ກຳລັງສ້າງຕຶກນີ້ນັ້ນມີຊື່ໃຜແດ່”

5 ແຕ່ພຣະເນດຂອງພຣະເຈົ້າຂອງເຂົາທັງຫລາຍຢູ່ເຫນືອພວກຜູ້ໃຫຍ່ຂອງພວກຢິວ ແລະເຂົາກໍຢັບຢັ້ງເຂົາທັງຫລາຍບໍ່ໄດ້ຈົນກວ່າເຣື່ອງນີ້ຈະຊາບເຖິງດາຣິອຸສ ແລະມີຄຳຕອບເປັນຫນັງສືກ່ຽວກັບເຣື່ອງນີ້ມາ

6 ສຳເນົາຈົດຫມາຍຊຶ່ງຕັທເຫນັຍຜູ້ວ່າຣາຊການມົນທົນຟາກແມ່ນ້ຳຂ້າງຕາເວັນຕົກ ແລະເຊທາໂບເຊນັຍແລະຄນະຂອງທ່ານຊຶ່ງເປັນຜູ້ກວດຣາຊການຢູ່ໃນມົນທົນຟາກແມ່ນ້ຳຂ້າງຕາເວັນຕົກສົ່ງໄປທູນດາຣິອຸສພຣະຣາຊາ

7 ທ່ານທັງຫລາຍໄດ້ສົ່ງຫນັງສືຊຶ່ງມີຂໍ້ຄວາມຕໍ່ໄປນີ້ “ກາບທູນດາຣິອຸສພຣະຣາຊາ ຂໍຊົງພຣະຈະເຣີນ

8 ຂໍພຣະຣາຊາຊົງຊາບວ່າຂ້າພຣະອົງທັງຫລາຍໄປຍັງມົນທົນຢູດາ ເຖິງພຣະວິຫານຂອງພຣະເຈົ້າຜູ້ຍິ່ງໃຫຍ່ຊຶ່ງກຳລັງສ້າງຂຶ້ນດ້ວຍຫີນ ແລະວາງໄມ້ໄວ້ເທິງຜະນັງ ງານນີ້ໄດ້ດຳເນີນໄປຢ່າງຂະຫຍັນຂັນແຂງແລະຈະເຣີນຂຶ້ນໃນມືຂອງເຂົາ

9 ແລ້ວຂ້າພຣະອົງທັງຫລາຍໄດ້ຖາມພວກຜູ້ໃຫຍ່ເຫລົ່ານັ້ນວ່າ, “ຜູ້ໃດທີ່ໃຫ້ສ້າງພຣະວິຫານແລະທຳກຳແພງຈົນສຳເຣັດ”

10 ຂ້າພຣະອົງທັງຫລາຍໄດ້ຖາມຊື່ຂອງເຂົາດ້ວຍ ເພື່ອກາບທູນໃຫ້ພຣະອົງຊົງຊາບ ເພື່ອຂ້າພຣະອົງຈະໄດ້ຂຽນຊື່ບຸກຄົນເຫລົ່ານັ້ນທີ່ເປັນຫົວຫນ້າຂອງເຂົາລົງໄວ້

11 ແລະນີ້ເປັນຄຳຕອບຂອງເຂົາແກ່ຂ້າພຣະອົງ "ເຮົາເປັນຜູ້ຮັບໃຊ້ຂອງພຣະເຈົ້າແຫ່ງຟ້າສວັນ ແລະແຜ່ນດິນ
ໂລກ ແລະເຮົາກຳລັງສ້າງພຣະວິຫານຊຶ່ງໄດ້ສ້າງມາຫລາຍປີແລ້ວຂຶ້ນໃຫມ່ ຊຶ່ງພຣະຣາຊາຜູ້ຍິ່ງໃຫຍ່ຂອງ
ອິສຣາເອນໄດ້ຊົງສ້າງໃຫ້ສຳເຣັດ
12 ແຕ່ເພາະວ່າບັນພະບຸຣຸດຂອງເຮົາໄດ້ກະທຳໃຫ້ພຣະເຈົ້າແຫ່ງຟ້າສວັນຊົງກິ້ວ ພຣະອົງຊົງມອບທ່ານເຫລົ່າ
ນັ້ນໄວ້ໃນພຣະຫັດຂອງເນບູກາດເນສຊາຣ໌ ພຣະຣາຊາແຫ່ງບາບີໂລນ ຄົນຄານເດອານຜູ້ຊົງທຳລາຍພຣະ
ວິຫານນີ້ ແລະຊົງກວາດເອົາປະຊາຊົນໄປຍັງບາບີໂລນ
13 ເຖິງຢ່າງໃດກໍດີໃນປີຕົ້ນແຫ່ງຣັຊການໄຊຣັສ ພຣະຣາຊາໄດ້ຊົງອອກຫນັງສືໃຫ້ສ້າງພຣະວິຫານຫລັງນີ້ຂອງ
ພຣະເຈົ້າຂຶ້ນໃຫມ່
14 ແລະເຄື່ອງໃຊ້ທອງຄຳແລະເງິນຂອງພຣະວິຫານຂອງພຣະເຈົ້າ ຊຶ່ງເນບຸກາດເນສຊາຣໄດ້ຊົງກວາດໄປ
ຈາກພຣະວິຫານຊຶ່ງຢູ່ໃນເຢຣູຊາເລັມນັ້ນ ແລະຊົງນຳໄປຍັງພຣະວິຫານຂອງບາບີໂລນ ສິ່ງເຫລົ່ານີ້ໄຊຣັສ
ພຣະຣາຊາຊົງນຳອອກມາຈາກພຣະວິຫານຂອງບາບີໂລນ ແລະຊົງມອບໄວ້ກັບຄົນນຶ່ງຊື່ ເຊສບັສຊາ ຜູ້ຊຶ່ງ
ພຣະອົງຊົງຕັ້ງໃຫ້ເປັນຜູ້ວ່າຣາຊການເມືອງ
15 ແລະພຣະອົງກ່າວກັບທ່ານດັ່ງນີ້ວ່າ, "ຈົ່ງຮັບເຄື່ອງໃຊ້ເຫລົ່ານີ້ໄປເກັບໄວ້ໃນພຣະວິຫານຊຶ່ງຢູ່ໃນເຢຣູຊາ
ເລັມ ແລະຈົ່ງສ້າງພຣະວິຫານຂອງພຣະເຈົ້າຂຶ້ນໃຫມ່ໃນທີ່ເດີມນັ້ນ"
16 ແລ້ວເຊສບັສຊາຄົນນີ້ໄດ້ມາວາງຮາກພຣະວິຫານຂອງພຣະເຈົ້າຊຶ່ງຢູ່ໃນເຢຣູຊາເລັມ ແລະຕັ້ງແຕ່ເວລານັ້ນ
ຈົນບັດນີ້ກໍກຳລັງສ້າງຢູ່ແລະຍັງບໍ່ສຳເຣັດ"
17 ເພາະສະນັ້ນຖ້າພຣະຣາຊາຊົງເຫັນດີກໍຂໍຊົງໃຫ້ຄົ້ນເບິ່ງໃນທີ່ເກັບເອກສານທີ່ໃນບາບີໂລນ ເພື່ອດູວ່າໄຊຣັສ
ພຣະຣາຊາ ຊົງອອກຫນັງສືໃຫ້ສ້າງພຣະວິຫານຫລັງນີ້ຂອງພຣະເຈົ້າຂຶ້ນໃຫມ່ໃນເຢຣູຊາເລັມຫລືບໍ່ ແລະຂໍ
ພຣະຣາຊາຮັບສັ່ງແກ່ຂ້າພຣະອົງທັງຫລາຍຕາມພໍພຣະທັຍຂອງພຣະອົງໃນເຣື່ອງນີ້"

## 6. ອິສຣາເອນຄົ້ນພົບຫນັງສືຂອງເຈົ້າຊີວິດໄຊຣັສ

1 ເຈົ້າດາຣິອຸສໄດ້ອອກຄຳສັ່ງໃຫ້ຊອກຫາ ເອກສານທີ່ມ້ຽນໄວ້ໃນຫ້ອງເກັບເອກສານທີ່ກຸງບາບີໂລນ
2 ແລ້ວພວກເຂົາກໍໄດ້ພົບຫນັງສືມ້ວນນຶ່ງຢູ່ໃນເມືອງເອກບາທານາແຂວງເມເດັຽ ຊຶ່ງມີເນື້ອຄວາມດັ່ງຕໍ່ໄປນີ້
3 "ໃນຣັຊການປີທີ່ນຶ່ງຂອງເຈົ້າໄຊຣັສ ພຣະອົງໄດ້ອອກຄຳສັ່ງໃຫ້ສ້າງພຣະວິຫານຂຶ້ນທີ່ນະຄອນເຢຣູຊາເລັມ
ແລະໃຫ້ມີບ່ອນຖວາຍເຄື່ອງເຜົາບູຊາຢູ່ໃນພຣະວິຫານ ພຣະວິຫານສູງຫົກສິບສອກ ແລະກວ້າງຫົກສິບ
ສອກ
4 ໃຫ້ສ້າງຝາດ້ວຍຫີນເປັນສາມຊັ້ນ ແລະໃຫ້ໃສ່ໄມ້ຢູ່ເທິງຫີນນັ້ນ ຄ່າໃຊ້ຈ່າຍຕົກເປັນເງິນຂອງພຣະຄັງຫລວງ
5 ສ່ວນເຄື່ອງໃຊ້ເປັນເງິນເປັນຄຳທີ່ເຈົ້າເນບຸກາດເນສຊາຣໄດ້ນຳມາແຕ່ພຣະວິຫານນະຄອນເຢຣູຊາເລັມນັ້ນກໍ
ໃຫ້ນຳເອົາກັບຄືນມາໄວ້ໃນບ່ອນເກົ່າຂອງມັນທີ່ພຣະວິຫານໃນນະຄອນເຢຣູຊາເລັມ"

6 ແລ້ວເຈົ້າຊີວິດດາຣິອຸສໄດ້ສັ່ງດັ່ງນີ້, "ເຖິງຕັທເທນັຍຜູ້ວ່າຣາຊການມົນທົນຟາກແມ່ນໍ້າຂ້າງຕາເວັນຕົກ ເຊ
ທາໂບເຊນັຍແລະຜູ້ຮ່ວມງານຂອງທ່ານທີ່ເປັນກວດຣາຊການຊຶ່ງຢູ່ໃນມົນທົນຟາກແມ່ນໍ້າຂ້າງຕາເວັນຕົກ
ຈົ່ງໄປເສັຽໃຫ້ຫ່າງເຖີດ
7 ຢ່າຍື່ນມືເຂົ້າມາຫຍຸ້ງກ່ຽວໃນການກໍ່ສ້າງນີ້ ຈົ່ງປ່ອຍໃຫ້ຜູ້ປົກຄອງແລະພວກຜູ້ນຳຊາວຢູດາສ້າງພຣະວິຫານ
ຂອງພຣະເຈົ້າຂຶ້ນໃຫມ່ໃນບ່ອນເກົ່າ
8 ດ້ວຍການນີ້ ຂ້າພະເຈົ້າຂໍສັ່ງໃຫ້ທ່ານຊ່ວຍເຫລືອໃນການກໍ່ສ້າງ ຈົ່ງເອົາເງິນຈາກຄັງຫລວງທີ່ໄດ້ມາຈາກ
ການເສັຽສ່ວຍໃນແຂວງເອີຟຣາດຕາເວັນຕົກຈ່າຍເປັນຄ່າແຮງງານໃຫ້ພວກເຂົາທັນທີໂລດ ເພື່ອວ່າບໍ່ໃຫ້
ວຽກຢຸດສະງັກລົງ
9 ສິ່ງໃດທີ່ພວກປະໂຣຫິດໃນນະຄອນເຢຣູຊາເລັມຕ້ອງການໃນແຕ່ລະມື້ນັ້ນ ຈົ່ງເອົາໃຫ້ພວກທ່ານເຊັ່ນວ່າ
ງົວນ້ອຍ ແກະ ຫລືແບ້ນ້ອຍ ເພື່ອເຜົາຖວາຍເປັນເຄື່ອງບູຊາແກ່ພຣະເຈົ້າແຫ່ງຟ້າສວັນ ພ້ອມທັງເຂົ້າບເລ
ເກືອ ເຫລົ້າອະງຸ່ນ ແລະນໍ້າມັນຫມາກກອກ
10 ເພື່ອວ່າເຂົາຈະໄດ້ເອົາສິ່ງຂອງເຫລົ່ານີ້ຖວາຍບູຊາໃຫ້ຖືກຕາມນໍ້າພຣະທັຍຂອງພຣະເຈົ້າແຫ່ງຟ້າສວັນ
ແລະໃຫ້ເຂົາອ້ອນຂໍພຣະພອນຈາກພຣະເຈົ້າສຳລັບຂ້າພະເຈົ້າແລະພວກບຸດຊາຍ
11 ຂ້າພະເຈົ້າຂໍສັ່ງວ່າ ຖ້າຜູ້ໃດບໍ່ປະຕິບັດຕາມຄຳສັ່ງນີ້ ໃຫ້ຖອນໄມ້ຂື່ເຮືອນຂອງຜູ້ນັ້ນອອກ ແຫລມປາຍແລ້ວ
ສຽບເຂົາເທິງໄມ້ນັ້ນ ແລະເຮືອນຂອງເຂົາກໍຈະກາຍເປັນກອງຂີ້ເຫຍື່ອ
12 ຂໍໃຫ້ພຣະເຈົ້າຜູ້ຊົງເລືອກເອົາກຸງເຢຣູຊາເລັມເປັນບ່ອນປະທັບ ເພື່ອໃຫ້ຄົນນະມັສການພຣະອົງນັ້ນຊົງກຳ
ຈັດເຈົ້າຊີວິດທຸກຄົນ ຫລືຊົນຊາດໃດໆທີ່ລະເມີດຄຳສັ່ງນີ້ ແລະພຍາຍາມທຳລາຍພຣະວິຫານ ຂ້າພະເຈົ້າ
ດາຣິອຸສອອກຄຳສັ່ງນີ້ທຸກຄົນຕ້ອງຟັງແລະປະຕິບັດຕາມດ້ວຍຄວາມຂະຫຍັນຂັນແຂງ

**ອິສຣາເອນຈັດງານສລອງພຣະວິຫານ**

13 ແລ້ວຜູ້ປົກຄອງຕັທເທນັຍຜູ້ວ່າຣາຊການມົນທົນຟາກແມ່ນໍ້າຂ້າງຕາເວັນຕົກ ເຊທາໂບເຊນັຍ ພ້ອມຂ້າຣາຊ
ການຂອງທ່ານທັງສອງກໍປະຕິບັດຕາມຄຳສັ່ງຂອງພຣະຣາຊາຢ່າງເຄັ່ງຄັດ
14 ພວກຜູ້ນຳຊາວຢູດາໄດ້ກໍ່ສ້າງພຣະວິຫານຢ່າງກ້າວຫນ້າດີ ຊຶ່ງເປັນໄປຕາມຄຳທຳນວາຍຂອງຮັກກັຍ ຜູ້ປະ
ກາດພຣະທັມແລະເຊຄາຣີຢາບຸດອິດໂດ ພວກເຂົາໄດ້ສ້າງພຣະວິຫານສຳເຣັດລົງຕາມພຣະດຳຣັດຂອງ
ພຣະເຈົ້າແຫ່ງອິສຣາເອນ ແລະຂອງໄຊຣັສ ດາຣິອຸສ ແລະອາຕາເຊີເຊສ ພຣະຣາຊາແຫ່ງເປີເຊັຽ
15 ພວກເຂົາໄດ້ສ້າງສຳເຣັດລົງໃນມື້ທີ່ສາມຂອງເດືອນສິບສອງ ຊຶ່ງເປັນຣາຊການປີທີ່ຫົກຂອງເຈົ້າດາຣິອຸສ
16 ແລ້ວຊາວອິສຣາເອນ ພວກປະໂຣຫິດ ຊາວເລວີ ແລະຄົນອື່ນໆທີ່ກັບຄືນມາຈາກຕ່າງຖິ່ນໄດ້ຮ່ວມກັນອຸທິດ
ຖວາຍພຣະວິຫານຢ່າງມ່ວນຊື່ນໃນການອຸທິດຖວາຍນີ້
17 ພວກເຂົາໄດ້ເອົາງົວນ້ອຍຮ້ອຍໂຕ ແກະສອງຮ້ອຍໂຕ ແກະນ້ອຍສີ່ຮ້ອຍໂຕ ຖວາຍບູຊາແລະເຂົາໄດ້ເອົາ
ແບ້ຜູ້ສິບສອງໂຕຕາມຕະກູນເຜົ່າອິສຣາເອນຖວາຍສາລະພາບບາບ

18 ພວກເຂົາຍັງໄດ້ແຕ່ງຕັ້ງພວກປະໂຣຫິດ ແລະພວກເລວີເປັນເຮັດວຽກໃນພຣະວິຫານທີ່ນະຄອນເຢຣູຊາເລັມ ຕາມຄຳແນະນຳທີ່ບັນທຶກໄວ້ໃນປື້ມຂອງໂມເຊ

**ງານເທສການປັສຄາ**

**(ພບຍ 16:1-8)**

19 ພວກປະຊາຊົນທີ່ກັບມາແຕ່ການເປັນຊະເລີຍຢູ່ຕ່າງຖິ່ນ ໄດ້ສະເຫລີມສະຫລອງເທສການປັສຄາໃນວັນທີ່ສິບສີ່ຂອງເດືອນທີ່ນຶ່ງ

20 ຝ່າຍປະໂຣຫິດແລະພວກເລວີ ທຸກຄົນໄດ້ທຳຕົນໃຫ້ສະອາດບໍຣິສຸດຕາມປະເພນີ ພວກເຂົາຂ້າສັດສຳລັບຖວາຍບູຊາປັສຄາແກ່ປະຊາຊົນທີ່ກັບຄືນມາແລະເພື່ອພວກປະໂຣຫິດອື່ນໆ ແລະເພື່ອເຂົາເອງ

21 ປະຊາຊົນອິສຣາເອນທີ່ກັບຄືນມາຈາກການຖືກກວາດໄປເປັນຊະເລີຍ ແລະຜູ້ທີ່ໄດ້ສົມທົບກັບພວກເຂົາ ແລະແຍກຕົວອອກຈາກມົນທິນຂອງບັນດາປະຊາຊາດແຫ່ງແຜ່ນດິນນັ້ນ ເພື່ອຈະນະມັສການພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງອິສຣາເອນ ກໍໄດ້ພາກັນຮັບປະທານເຄື່ອງຖວາຍບູຊາ

22 ພວກເຂົາໄດ້ສະເຫລີມສະຫລອງເທສການເຂົ້າຈີ່ບໍ່ໃສ່ເຊື້ອແປ້ງເປັນເວລາເຈັດປີ ພວກເຂົາມີຄວາມມ່ວນຊື່ນຢ່າງຍິ່ງ ເພາະວ່າພຣະຜູ້ເປັນເຈົ້າໄດ້ຊົງທຳໃຫ້ເຈົ້າຊີວິດແຫ່ງອັສຊີເຣັຽເພິ່ງພໍໃຈໃນພວກເຂົາ ແລະພຣະອົງໄດ້ສນັບສນຸນໃຫ້ເຂົາສ້າງພຣະວິຫານພຣະເຈົ້າ ພຣະເຈົ້າແຫ່ງອິສຣາເອນ

## 7. ເອັຊຣາມາຮອດກຸງເຢຣູຊາເຣັມ

1 ຫລາຍປີຕໍ່ມາ ເມື່ອອາຕາເຊີເຊສ ເປັນເຈົ້າຈັກກະພັດແຫ່ງເປີເຊັຽ ມີຊາຍຄົນນຶ່ງຊື່ວ່າ ເອັຊຣາ ເອັຊຣາເປັນບຸດຂອງເຊຣັຍຢາ ຜູ້ເປັນບຸດຂອງອາຊາຣີຢາ ຜູ້ເປັນບຸດຂອງຮີນກີຢາ

2 ຜູ້ເປັນບຸດຂອງຊັນລູມ ຜູ້ເປັນບຸດຂອງຊາໂດກ ຜູ້ເປັນບຸດຂອງອາຮີທູບ

3 ຜູ້ເປັນບຸດຂອງອາມາຣີຢາ ຜູ້ເປັນບຸດຂອງອາຊາຣີຢາ ຜູ້ເປັນບຸດຂອງເມຣາອີໂຢດ

4 ຜູ້ເປັນບຸດຂອງເຊຣາຮີຢາ ຜູ້ເປັນບຸດຂອງອຸສຊີ ຜູ້ເປັນບຸດຂອງບຸກກີ

5 ຜູ້ເປັນບຸດຂອງອາບີຊູອາ ຜູ້ເປັນບຸດຂອງພີເນຮັສ ຜູ້ເປັນບຸດຂອງເອເລອາຊາ ຜູ້ເປັນບຸດຂອງອາໂຣນມະຫາປະໂຣຫິດ

6 ເອັຊຣາເປັນຜູ້ຮັບຮູ້ໃນດ້ານພຣະທັມ ທີ່ພຣະຜູ້ເປັນເຈົ້າແຫ່ງອິສຣາເອນໄດ້ປະທານໃຫ້ແກ່ໂມເຊ ເຈົ້າຊີວິດໄດ້ໃຫ້ທຸກສິ່ງຕາມທີ່ເອັຊຣາຂໍ ເພາະວ່າທ່ານເປັນຜູ້ມີພຣະພອນມາຈາກພຣະເຈົ້າ ເອັຊຣາໄດ້ເດີນທາງຈາກບາບີໂລນສູ່ກຸງເຢຣູຊາເລັມ

7 ມີບາງຄົນໃນຄົນອິສຣາເອນ ຊຶ່ງມີບັນດາປະໂຣຫິດ ບັນດາຄົນເລວີ ນັກດົນຕຣີປະຈຳວິຫານ ຜູ້ເຝົ້າວິຫານ ແລະກຳມະກອນ ປີນີ້ແມ່ນປີທີ່ເຈັດທີ່ເຈົ້າອາຕາເຊີເຊສເປັນຜູ້ປົກຄອງເອງ

8 ແລະທ່ານໄດ້ມາຮອດກຸງເຢຣູຊາເລັມໃນວັນທີ່ນຶ່ງເດືອນຫ້າ ຊຶ່ງເປັນປີທີ່ເຈັດຂອງພຣະຣາຊາ

9 ເພາະໃນວັນທີ່ນຶ່ງຂອງເດືອນທີ່ນຶ່ງທ່ານໄດ້ເລີ້ມຂຶ້ນໄປຈາກບາບີໂລນ ແລະໃນວັນທີ່ນຶ່ງຂອງເດືອນທີ່ຫ້າ
ທ່ານມາຍັງເຢຣູຊາເລັມ ດ້ວຍຄວາມຊົດຊ່ອຍຂອງພຣະເຈົ້າ
10 ເອັຊຣາ ອຸທິດຕົນເອງເລົ່າຮຽນພຣະທັມຂອງພຣະຜູ້ເປັນເຈົ້າ ທັງຝຶກຝົນ ແລະສັ່ງສອນພຣະທັມນີ້ເປັນປະ
ຈຳແກ່ປະຊາຊົນອິສຣາເອນ
11 ເຈົ້າຊີວິດອາຕາເຊີເຊສ ໄດ້ມອບເອກສານໃຫ້ ເອັຊຣາຜູ້ເປັນປະໂຣຫິດ ແລະເປັນຜູ້ຮອບຮູ້ໃນດ້ານວິຊາ
ຄວາມຮູ້ຝ່າຍພຣະທັມ ແລະພຣະຄຳສັ່ງທີ່ພຣະຜູ້ເປັນເຈົ້າຊົງມອບໃຫ້ແກ່ຊາວອິສຣາເອນ ດັ່ງມີເນື້ອ
ຄວາມຕໍ່ລົງໄປນີ້
12 “ຈາກພຣະມະຫາກະສັດອາຕາເຊີເຊສ ເຖິງປະໂຣຫິດເອັຊຣາ ຜູ້ຮອບຮູ້ໃນດ້ານພຣະທັມຂອງພຣະເຈົ້າ
ເທິງຟ້າສວັນ
13 ຂ້າພະເຈົ້າໄດ້ສັ່ງໄປທົ່ວຈັກກະພົບໃຫ້ຊາວອິສຣາເອນທຸກຄົນ ທັງພວກປະໂຣຫິດ ແລະຄົນເລວີທີ່ອາສາສ
ມັກໃຫ້ໄປຍັງກຸງເຢຣູຊາເລັມນຳທ່ານ
14 ຂ້າພະເຈົ້າຜູ້ເປັນເຈົ້າຊີວິດ ພ້ອມທັງຜູ້ປຶກສາຂອງຂ້າພະເຈົ້າເຈັດທ່ານຂໍສົ່ງທ່ານໄປສືບສວນຫາຕົ້ນປາຍ
ສາຍເຫດທີ່ກຸງເຢຣູຊາເລັມ ແລະແຂວງຢູດາ ເພື່ອເບິ່ງວ່າ ພຣະທັມທີ່ພຣະຜູ້ເປັນເຈົ້າຂອງທ່ານໄດ້ມອບ
ຫມາຍໃຫ້ແກ່ທ່ານນັ້ນເປັນຢ່າງໃດ ຍັງມີຄົນເຊື່ອຟັງຢູ່ຫລືບໍ່
15 ທ່ານຈົ່ງນຳເອົາຄຳ ແລະເງິນໄປຖວາຍດ້ວຍ ເພາະຂ້າພະເຈົ້າພ້ອມທັງທີ່ປຶກສາຂອງຂ້າພະເຈົ້າປາຖນາ
ຢາກຖວາຍໃຫ້ແກ່ພຣະເຈົ້າແຫ່ງອິສຣາເອນ ຊຶ່ງມີພຣະວິຫານທີ່ນະຄອນເຢຣູຊາເລັມ
16 ສ່ວນຄຳ ແລະເງິນທີ່ທ່ານຮວບຮວມໄດ້ທົ່ວແຂວງບາບີໂລນ ພ້ອມທັງຂອງທີ່ຊາວອິສຣາເອນ ແລະປະໂຣ
ຫິດທັງຫລາຍຖວາຍໃຫ້ແກ່ພຣະວິຫານພຣະເຈົ້າຂອງພວກເຂົາທີ່ກຸງເຢຣູຊາເລັມນັ້ນ
17 ໃຫ້ທ່ານເອົາໄປຖວາຍບູຊາຄືກັນ ໃຫ້ທ່ານຈ່າຍເງິນນີ້ຢ່າງລະມັດລະວັງ ໃຫ້ຊື້ງົວ ແກະ ແກະນ້ອຍ ເຂົ້າ
ນ້ຳອະງຸ່ນ ແລະເອົາສິ່ງເຫລົ່ານີ້ຖວາຍຢູ່ເທິງແທ່ນບູຊາ ທີ່ພຣະວິຫານໃນກຸງເຢຣູຊາເລັມ
18 ທ່ານອາດຈະເອົາເງິນ ແລະຄຳທີ່ຍັງເຫລືອຢູ່ນີ້ໃຊ້ຕາມໃຈຂອງທ່ານ ແລະເພື່ອນຮ່ວມປະເທດຂອງທ່ານ
ຕາມຄວາມປາຖນາ ແຕ່ໃຫ້ເປັນຕາມນ້ຳພຣະທັຍຂອງພຣະເຈົ້າ
19 ແລະເຄື່ອງໃຊ້ທຸກຢ່າງທີ່ໄດ້ມອບໃຫ້ແກ່ທ່ານ ສຳລັບໃຊ້ສອຍໃນພິທີທີ່ພຣະວິຫານນັ້ນ ໃຫ້ຖວາຍແກ່ພຣະຜູ້
ເປັນເຈົ້າທີ່ກຸງເຢຣູຊາເລັມ
20 ຖ້າວ່າ ທ່ານຕ້ອງການສິ່ງອື່ນໆອີກສຳລັບພຣະວິຫານ ທ່ານຈົ່ງເອົາໄດ້ຈາກພຣະຄັງຫລວງ
21 ຂ້າພະເຈົ້າ ເຈົ້າຊີວິດອາຕາເຊີເຊສ ໄດ້ສັ່ງໃຫ້ບັນດາຂ້າຣາຊການພະແນກຄັງເງິນຕາມແຂວງເອີຟຣາດທິດ
ຕາເວັນຕົກ ໃຫ້ຈັດຫາທຸກສິ່ງຢ່າງຮີບດ່ວນແກ່ເອັຊຣາຜູ້ເປັນປະໂຣຫິດ ແລະຜູ້ຮອບຮູ້ຝ່າຍພຣະທັມ ແລະ
ພຣະຄຳສັ່ງຂອງພຣະເຈົ້າເທິງຟ້າສວັນ ໃນທຸກສິ່ງທີ່ທ່ານຮ້ອງຂໍຕາມຂອບເຂດຈຳກັດ
22 ເຖິງຈຳນວນເງິນນຶ່ງຮ້ອຍຕາລັນ ເຂົ້າບເລເຖິງນຶ່ງຮ້ອຍໂກຣ໌ ເຫລົ້າອະງຸ່ນນຶ່ງຮ້ອຍບັທ ນ້ຳມັນນຶ່ງຮ້ອຍບັທ
ແລະເກືອບໍ່ຈຳກັດຈຳນວນເທົ່າໃດ

23 ສິ່ງທີ່ພຣະເຈົ້າເທິງຟ້າສວັນຕ້ອງການສຳລັບພຣະວິຫານຂອງພຣະອົງ ເພື່ອເປັນການຮູ້ຢ່າງແນ່ນອນວ່າ ພຣະອົງຈະບໍ່ຊົງພຣະພິໂຣດຣາຊອານາຈັກຂອງຂ້າພະເຈົ້າ ແລະຜູ້ທີ່ຈະຂຶ້ນຄອງຣາຊສົມບັດແທນຂ້າພະເຈົ້າ

24 ທ່ານບໍ່ຄວນເກັບຄ່າທັມນຽມຈາກບັນດາປະໂຣຫິດ ຄົນເລວີ ນັກດົນຕຣີ ຄົນເຝົ້າປະຕູ ຄົນໃຊ້ປະຈຳພຣະວິຫານ ຫລືຜູ້ຮັບໃຊ້ອື່ນໆທີ່ມີສ່ວນກ່ຽວຂ້ອງໃນພຣະວິຫານຂອງພຣະເຈົ້ານີ້

25 “ສ່ວນເຈົ້າ ເອັຊຣາເອີຍ ທ່ານຈົ່ງໃຊ້ສະຕິປັນຍາທີ່ພຣະຜູ້ເປັນເຈົ້າຊົງປະທານໃຫ້ແກ່ທ່ານນັ້ນ ແຕ່ງຕັ້ງຜູ້ປົກຄອງ ເພື່ອຄຸ້ມຄອງປະຊາຊົນທຸກຄົນທີ່ແຂວງເອີຟຣາດທິດຕາເວັນຕົກສົ ທຸກຄົນທີ່ຮູ້ຈັກພຣະທັມຂອງພຣະເຈົ້າຂອງທ່ານ ທ່ານຕ້ອງສັ່ງສອນພຣະທັມນີ້ໃຫ້ແກ່ຜູ້ທີ່ຍັງບໍ່ທັນຮູ້ຈັກ

26 ຖ້າວ່າຜູ້ໃດບໍ່ຍອມເຊື່ອຟັງພຣະທັມພຣະເຈົ້າຂອງທ່ານ ຫລືກົດບັນຍັດຂອງຈັກກະພັບ ຜູ້ນັ້ນຕ້ອງຖືກລົງໂທດທັນທີ ຄືປະຫານຊີວິດ ຖືກເນຣະເທດ ຖືກຍຶດຊັບ ຫລືຖືກຄຸກກໍໄດ້”

27 ຂໍສັຣເສີນພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງບັນພະບຸຣຸດຂອງເຮົາ ພຣະອົງໄດ້ຊົງທຳໃຫ້ເຈົ້າຊີວິດຖວາຍກຽດແດ່ພຣະວິຫານຂອງພຣະຜູ້ເປັນເຈົ້າທີ່ກຸງເຢຣູຊາເລັມ

28 ດ້ວຍພຣະຄຸນຂອງພຣະເຈົ້າ ໄດ້ຊົງບັນດານຂ້າພະເຈົ້າໄດ້ຮັບຄວາມກະຣຸນາຈາກເຈົ້າຊີວິດ ແລະທີ່ປຶກສາຂອງພຣະອົງ ແລະຕໍ່ຫນ້າບັນດາຂ້າຣາຊການທັງຫມົດທີ່ມີອຳນາດຂອງພຣະຣາຊາ ແລະຂ້າພະເຈົ້າມີໃຈກ້າຂຶ້ນ ເພາະພຣະຫັດຂອງພຣະເຈົ້າຂອງຂ້າພະເຈົ້າຢູ່ກັບຂ້າພະເຈົ້າ ແລະຂ້າພະເຈົ້າໄດ້ຮວບຮວມບຸກຄົນຊັ້ນຜູ້ນຳຈາກອິສຣາເອນຂຶ້ນໄປກັບຂ້າພະເຈົ້າ

## 8.

1 ຕໍ່ໄປນີ້ເປັນຫົວຫນ້າຕະກູນຂອງເຂົາທັງຫລາຍ ແລະນີ້ເປັນສຳມະໂນຄົວເຊື້ອສາຍຂອງບັນດາຜູ້ທີ່ຂຶ້ນໄປກັບຂ້າພະເຈົ້າຈາກບາບີໂລນ ໃນຣັຊການອາຕາເຊີເຊສພຣະຣາຊາຄື

2 ຈາກເຊື້ອສາຍພີເນຮັສ ມີ ເກີໂຊມ ຈາກເຊື້ອສາຍອີທາມາ ມີ ດານີເອນ ຈາກເຊື້ອສາຍດາວິດ ມີ ຮັດທຸສ

3 ຈາກເຊື້ອສາຍເຊການີຢາ ຈາກເຊື້ອສາຍປາໂຣຊ ມີເຊຄາຣີຢາ ພ້ອມກັບທ່ານ ມີຜູ້ຊາຍຂຶ້ນທະບຽນໄວ້ນຶ່ງຮ້ອຍຫ້າສິບຄົນ

4 ຈາກເຊື້ອສາຍປາຮັດໂມອາບ ມີ ເອລີເອໂຮເອນັຍ ບຸດເຊຣາຮີຢາ ພ້ອມກັບທ່ານ ມີຜູ້ຊາຍສອງຮ້ອຍຄົນ

5 ຈາກເຊື້ອສາຍຊັດທູ ມີ ເຊຄາຣີຢາ ບຸດຂອງຢາຮາຊີເອນ ພ້ອມກັບທ່ານ ມີຜູ້ຊາຍສາມຮ້ອຍຄົນ

6 ຈາກເຊື້ອສາຍອາດີນ ມີ ເອເບດ ບຸດຂອງໂຢນາທານ ພ້ອມກັບທ່ານ ມີຜູ້ຊາຍຫ້າສິບຄົນ

7 ຈາກເຊື້ອສາຍເອລາມ ມີເຢຊາອີຢາ ບຸດຂອງອາທາລີຢາ ພ້ອມກັບທ່ານ ມີຜູ້ຊາຍເຈັດສິບຄົນ

8 ຈາກເຊື້ອສາຍຂອງເຊຟາທີຢາ ມີເຊບາດີຢາ ບຸດຂອງມີຄາເອນ ພ້ອມກັບທ່ານ ມີຜູ້ຊາຍແປດສິບຄົນ

9 ຈາກເຊື້ອສາຍຂອງໂຢອາບ ມີ ໂອບາດີຢາ ບຸດຂອງເຢຮີເອນ ພ້ອມກັບທ່ານ ມີຜູ້ຊາຍສອງຮ້ອຍສິບແປດຄົນ

10 ຈາກເຊື້ອສາຍບານີ ມີ ເຊໂລມິທ ບຸດຂອງໂຢຊີພີຢາ ພ້ອມກັບທ່ານ ມີຜູ້ຊາຍນຶ່ງຮ້ອຍຫົກສິບຄົນ
11 ຈາກເຊື້ອສາຍຂອງເບບັຍ ມີ ເຊຄາຣີຢາ ບຸດຂອງເບບັຍ ພ້ອມກັບທ່ານ ມີຜູ້ຊາຍຊາວແປດຄົນ
12 ຈາກເຊື້ອສາຍຂອງອັສກາດ ມີ ເຢຮານານ ບຸດຂອງຮັກກາທານ ພ້ອມກັບທ່ານ ມີຜູ້ຊາຍນຶ່ງຮ້ອຍສິບຄົນ
13 ຈາກເຊື້ອສາຍອາໂດນີກາມ ມີຜູ້ທີ່ມານຳຫລັງ ນີ້ເປັນຊື່ຂອງເຂົາຄື ເອລີເຟເລທ ເຢອູເອນ ແລະເຊມັຍຢາ
ພ້ອມກັບພວກເຂົາ ມີຜູ້ຊາຍຫົກສິບຄົນ
14 ຈາກເຊື້ອສາຍຂອງບິກວັຍ ມີ ອູທັຍ ແລະຊັກເກີ ພ້ອມກັບພວກເຂົາ ມີຜູ້ຊາຍເຈັດສິບຄົນ
15 ຂ້າພະເຈົ້າໄດ້ຮວບຮວມເຂົາທັງຫລາຍເຂົ້າມາຍັງແມ່ນ້ຳທີ່ໄຫລໄປສູ່ອາຮາວາ ເຮົາຕັ້ງຄ້າຍຢູ່ທີ່ນັ້ນສາມມື້
ເມື່ອຂ້າພະເຈົ້າສຳຣວດເບິ່ງປະຊາຊົນ ແລະປະໂຣຫິດ ຂ້າພະເຈົ້າບໍ່ເຫັນເຊື້ອສາຍຂອງເລວີທີ່ນັ້ນເລີຍ
16 ແລ້ວຂ້າພະເຈົ້າຈຶ່ງໃຫ້ໄປເອີ້ນເອລີເອເຊີ ອາຣີເອນ ເຊມັຍຢາ ເອນນາທານ ຢາຣິບ ເອນນາທານ ນາ
ທານ ເຊຄາຣີຢາ ແລະເມຊູນລາມ ບຸກຄົນຊັ້ນຫົວຫນ້າ ແລະໃຫ້ຫາໂຢອາຣິບ ແລະເອນນາທານ ຜູ້ເປັນ
ຄົນມີຄວາມຮອບຮູ້
17 ແລະສົ່ງເຂົາໄປຫາທ່ານອິດໂດ ບຸກຄົນຊັ້ນຫົວຫນ້າຍັງສະຖານທີ່ບ່ອນຊື່ກາຊີພີອາ ຄືໃຫ້ບອກທ່ານອິດໂດ
ແລະພີ່ນ້ອງຂອງທ່ານຜູ້ເປັນຄົນໃຊ້ປະຈຳພຣະວິຫານວ່າ ຂໍສົ່ງຜູ້ບົວລະບັດສຳລັບພຣະວິຫານຂອງພຣະ
ເຈົ້າຂອງເຮົາມາຫາເຮົາ
18 ແລະໂດຍພຣະຫັດອົງຊົງພຣະຄຸນຂອງພຣະເຈົ້າຂອງເຮົາຢູ່ກັບເຮົາ ເຂົາໄດ້ນຳຄົນທີ່ມີຄວາມສຸຂຸມມາໃຫ້
ເຮົາ ເປັນເຊື້ອສາຍຂອງມາລີ ບຸດເລວີ ຜູ້ເປັນບຸດອິສຣາເອນ ຊື່ເຊເຣບີຢາ ກັບບຸດຊາຍແລະຍາດຕິພີ່ນ້ອງ
ຮວມສິບແປດຄົນ
19 ທັງຮາຊາບີຢາ ແລະເຢຊາອີຢາ ເຊື້ອສາຍຂອງເມຣາຣີກັບຍາດຕິພີ່ນ້ອງ ແລະບຸດຂອງເຂົາຮ່ວມຊາວຄົນ
20 ແລະຄົນໃຊ້ປະຈຳພຣະວິຫານ ຊຶ່ງດາວິດແລະຂ້າຣາຊການຂອງພຣະອົງໄດ້ຈັດຕັ້ງຂຶ້ນໄວ້ ເພື່ອບົວລະ
ບັດຄົນເລວີ ມີຄົນໃຊ້ປະຈຳພຣະວິຫານສອງຮ້ອຍຊາວຄົນ ບຸກຄົນເຫລົ່ານີ້ທັງຫມົດມີຊື່ຈົດໄວ້ທັງນັ້ນ
21 ແລ້ວຂ້າພະເຈົ້າກໍປະກາດໃຫ້ຖືສິນອົດອາຫານທີ່ນັ້ນ ຄືທີ່ແມ່ນ້ຳອາຮາວາ ເພື່ອເຮົາທັງຫລາຍຈະໄດ້ຖ່ອມ
ຕົວລົງຕໍ່ພຣະເຈົ້າຂອງເຮົາ ເພື່ອຈະທູນຂໍຫົນທາງອັນປອດພັຍຈາກພຣະອົງສຳລັບເຮົາ ລູກຫລານຂອງເຮົາ
ແລະເຂົ້າຂອງທັງຫມົດຂອງເຮົາ
22 ເພາະຂ້າພະເຈົ້າລະອາຍທີ່ຈະທູນຂໍກອງທະຫານ ແລະພົນມ້າຈາກພຣະຣາຊາເພື່ອຊ່ອຍເຮົາສູ້ສັດຕຣູຕາມ
ທາງຂອງເຮົາ ໃນເມື່ອເຮົາໄດ້ກາບທູນ ພຣະຣາຊາແລ້ວວ່າ, “ພຣະຫັດຂອງພຣະເຈົ້າຂອງເຮົາຢູ່ກັບບັນດາ
ຜູ້ທີ່ສແວງພຣະອົງໃຫ້ໄດ້ຮັບຜົນດີ ແຕ່ຣິດທານຸພາບແລະພຣະພິໂຣດຂອງພຣະອົງຕໍ່ສູ້ຄົນເຫລົ່ານັ້ນທີ່ປະ
ຖິ້ມພຣະອົງ
23 ເຮົາຈຶ່ງອົດອາຫານແລະອ້ອນວອນພຣະເຈົ້າຂອງເຮົາເພື່ອເຣື່ອງນີ້ ແລະພຣະອົງຊົງຟັງສຽງຮ້ອງທູນຂອງ
ເຮົາ

24 ແລະຂ້າພະເຈົ້າໄດ້ເລືອກຕັ້ງປະໂຣຫິດໃຫຍ່ສິບສອງຄົນ ຄື ເຊເຣບີຢາ ຮາຊາບີຢາ ແລະຍາດຂອງເຂົາທີ່
ຢູ່ກັບເຂົາສິບຄົນ
25 ແລະຂ້າພະເຈົ້າໄດ້ຊັ່ງເງິນ ແລະຄຳ ແລະເຄື່ອງໃຊ້ກັບເຄື່ອງບູຊາສຳລັບພຣະວິຫານຂອງເຮົາມອບໃຫ້ເຂົາ
ທັງຫລາຍຊຶ່ງພຣະຣາຊາແລະທີ່ປຶກສາແລະເຈົ້ານາຍຂອງພຣະອົງ ແລະຄົນອິສຣາເອນທັງປວງທີ່ນັ້ນໄດ້
ຖວາຍໄວ້
26 ຂ້າພະເຈົ້າໄດ້ຊັ່ງໃສ່ມືຂອງເຂົາເປັນເງິນຫົກຮ້ອຍຫ້າສິບຕະລັນ ແລະເຄື່ອງໃຊ້ທີ່ທຳດ້ວຍເງິນມີຄ່ານຶ່ງຮ້ອຍ
ຕະລັນ ແລະຄຳນຶ່ງຮ້ອຍຕະລັນ
27 ຊາມຄຳຊາວໃບມີຄ່ານຶ່ງພັນດາຣິກ ແລະເຄື່ອງໃຊ້ທອງສຳລິດເນື້ອລະອຽດສຸກໃສສອງໃບມີຄ່າເທົ່າກັບຄຳ
28 ແລະຂ້າພະເຈົ້າບອກເຂົາວ່າ, “ທ່ານທັງຫລາຍບໍຣິສຸດຕໍ່ພຣະເຈົ້າ ແລະເຄື່ອງໃຊ້ກໍບໍຣິສຸດ ແລະເງິນກັບຄຳ
ເປັນຂອງຖວາຍດ້ວຍໃຈສມັກແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງບັນພະບຸຣຸດຂອງທ່ານທັງຫລາຍ
29 ຈົ່ງເຝົ້າດູແລໄວ້ຈົນກວ່າທ່ານຊັ່ງສິ່ງເຫລົ່ານັ້ນຕໍ່ຫນ້າປະໂຣຫິດໃຫຍ່ແລະຄົນເລວີ ແລະຫົວຫນ້າຕະກູນອິສ
ຣາເອນໃນເຢຣູຊາເລັມພາຍໃນຫ້ອງພຣະວິຫານຂອງພຣະເຈົ້າ
30 ບັນດາປະໂຣຫິດແລະຄົນເລວີຈຶ່ງຮັບເງິນແລະຄຳທີ່ໄດ້ຊັ່ງ ແລະເຄື່ອງໃຊ້ ເພື່ອນຳໄປທີ່ເຢຣູຊາເລັມ
ທີ່ພຣະວິຫານຂອງພຣະເຈົ້າຂອງເຮົາ
31 ແລະເຮົາກໍອອກຈາກແມ່ນ້ຳອາຮາວາ ໃນວັນທີ່ສິບສອງຂອງເດືອນຕົ້ນ ເພື່ອໄປຍັງເຢຣູຊາເລັມ ແລະພຣະ
ຫັດຂອງພຣະເຈົ້າຂອງເຮົາຢູ່ກັບເຮົາ ແລະພຣະອົງຊົງຊ່ອຍກູ້ເຮົາໃຫ້ພົ້ນຈາກມືຂອງສັດຕຣູແລະຈາກພວກ
ຊຸ່ມຄອຍຢູ່ຕາມທາງ
32 ເຮົາມາເຖິງເຢຣູຊາເລັມ ແລະພັກຢູ່ທີ່ນີ້ສາມມື້
33 ໃນວັນທີ່ສີ່ພາຍໃນພຣະວິຫານຂອງພຣະເຈົ້າຂອງເຮົາ ກໍຊັ່ງຄຳ ແລະເຄື່ອງໃຊ້ໃສ່ມືຂອງເມເຣໂມດປະໂຣ
ຫິດ ບຸດຂອງອູຣີອາ ແລະຄົນທີ່ຢູ່ກັບເຂົາ ຄືເອເລອາຊາບຸດພີເນຮັສ ແລະຄົນທີ່ຢູ່ກັບເຂົາທັງຫລາຍຄື ໂຢ
ຊາບາດ ບຸດຂອງເຢຊູອາ ແລະໂນອາດີຢາ ບຸດຂອງບິນນູອີ ຄົນເລວີ
34 ເຂົາຊັ່ງແລະນັບທັງຫມົດ ແລະບັນທຶກນ້ຳຫນັກຂອງທຸກສິ່ງໄວ້
35 ໃນວັນນັ້ນບັນດາຜູ້ທີ່ຖືກກວາດໄປເປັນຊະເລີຍ ຊຶ່ງມາຈາກການເປັນຊະເລີຍໄດ້ຖວາຍເຄື່ອງເຜົາບູຊາແກ່
ພຣະເຈົ້າແຫ່ງອິສຣາເອນ ມີງົວເຖິກສິບສອງໂຕສຳລັບພວກອິສຣາເອນທັງປວງ ແກະເຖິກເກົ້າສິບຫົກໂຕ
ແລະແກະເຈັດສິບເຈັດໂຕ ແລະແບ້ຜູ້ສິບສອງໂຕເປັນເຄື່ອງບູຊາໄຖ່ບາບ ທັງຫມົດນີ້ເປັນເຄື່ອງເຜົາບູຊາ
ຖວາຍພຣະເຈົ້າ
36 ເຂົາທັງຫລາຍໄດ້ມອບພຣະຣາຊໂອງການໃຫ້ແກ່ ຜູ້ປົກຄອງຂອງພຣະຣາຊາ ແລະແກ່ຜູ້ວ່າຣາຊການມົນ
ທົນຟາກຕາເວັນຕົກຂອງແມ່ນ້ຳເອີຟຣາດ ແລະທ່ານເຫລົ່ານີ້ໄດ້ຊ່ອຍເຫລືອປະຊາຊົນແລະພຣະວິຫານ
ຂອງພຣະເຈົ້າ

## 9. ຄຳອ້ອນວອນສາລະພາບຂອງເອັຊຣາ

1 ພາຍຫລັງເຫດການເຫລົ່ານີ້ ເຈົ້າຫນ້າທີ່ກໍເຂົ້າມາຫາຂ້າພະເຈົ້າກ່າວວ່າ, "ຊົນຊາດອິສຣາເອນແລະບັນດາ
ປະໂຣຫິດກັບຄົນເລວີບໍ່ໄດ້ຮັກສາຕົວ ແຍກອອກຈາກຊົນຊາດທັງຫລາຍແຫ່ງແຜ່ນດິນເຫລົ່ານັ້ນເຂົາໄດ້
ເຮັດໃນສິ່ງທີ່ຫນ້າກຽດຊັງດັ່ງດຽວກັນກັບພວກນີ້ໄດ້ເຮັດ ຄືຈາກຄົນການາອານ ຄົນຮິດຕີ ຄົນເປຣີສຊີ ຄົນ
ເຢບຸສ ຄົນອັມໂມນ ຄົນໂມອາບ ຄົນເອຢິບ ແລະຄົນອາໂມຣິດ
2 ເພາະເຂົາຮັບບຸດຍິງຂອງຊົນຊາດເຫລົ່ານີ້ເປັນເມັຽຂອງເຂົາເອງ ແລະຂອງລູກຊາຍຂອງເຂົາ ດັ່ງນັ້ນເຊື້ອ
ສາຍບໍຣິສຸດໄດ້ປະປົນກັບຊົນຊາດທັງຫລາຍຂອງແຜ່ນດິນເຫລົ່ານັ້ນ ນີ້ແຫລະໃນຄວາມຜິດຂໍ້ນີ້ ມືຂອງເຈົ້າ
ຫນ້າທີ່ຊັ້ນຫົວຫນ້າ ແລະຜູ້ຄອງເມືອງໄດ້ເດັ່ນທີ່ສຸດ"
3 ເມື່ອຂ້າພະເຈົ້າໄດ້ຍິນຢ່າງນີ້ ຂ້າພະເຈົ້າກໍຈີກເສື້ອຂອງຂ້າພະເຈົ້າທັງເສື້ອຄຸມຂອງຂ້າພະເຈົ້າແລະດຶງຜົມ
ອອກຈາກຫົວຂອງຂ້າພະເຈົ້າ ແລະດຶງຫນວດ ແລະນັ່ງລົງດ້ວຍຄວາມເປັນທຸກໃຈ
4 ແລ້ວບັນດາຄົນທີ່ສັ່ນສະທ້ານໄປດ້ວຍພຣະທັມຂອງພຣະເຈົ້າແຫ່ງອິສຣາເອນ ເຫດດ້ວຍຄວາມຜິດຂອງ
ພວກຊະເລີຍທີ່ໄດ້ກັບມາ ໄດ້ມາປະຊຸມຕໍ່ຫນ້າຂ້າພະເຈົ້າ ເມື່ອຂ້າພະເຈົ້ານັ່ງຕະລຶງຢູ່ຈົນເຖິງເວລາຖວາຍ
ເຄື່ອງບູຊາໃນຕອນແລງ

### ຄຳອ້ອນວອນຂອງເອັຊຣາ

5 ໃນເວລາບູຊາຕອນແລງນັ້ນ ຂ້າພະເຈົ້າໄດ້ລຸກຂຶ້ນຈາກການອົດອາຫານ ມີເຄື່ອງແຕ່ງກາຍ ແລະເສື້ອຄຸມ
ຂອງຂ້າພະເຈົ້າຈີກຂາດ ແລະຂ້າພະເຈົ້າກໍຄຸເຂົ່າລົງ ແລະຊູມືຂຶ້ນຕໍ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້າພະ
ເຈົ້າ
6 ແລະຂ້າພະເຈົ້າທູນວ່າ, "ຂ້າແດ່ພຣະເຈົ້າຂອງຂ້າພຣະອົງ ຂ້າພຣະອົງລະອາຍທີ່ຈະເງີຍຫນ້າຫາພຣະອົງ
ພຣະເຈົ້າຂອງຂ້າພຣະອົງ ເພາະວ່າຄວາມບາບຊົ່ວຂອງຂ້າພຣະອົງທັງຫລາຍຂຶ້ນສູງກວ່າຫົວຂອງຂ້າພຣະ
ອົງ ແລະກັມຊົ່ວຂອງຂ້າພຣະອົງທັງຫລາຍກອງຂຶ້ນໄປເຖິງຟ້າສວັນ
7 ຂ້າພຣະອົງທັງຫລາຍມີກັມຊົ່ວຍິ່ງໃຫຍ່ຕັ້ງແຕ່ສະໄຫມບັນພະບຸຣຸດຂອງຂ້າພຣະອົງທັງຫລາຍ ຈົນເຖິງ
ທຸກວັນນີ້ ແລະເພາະຄວາມບາບຊົ່ວຂອງຂ້າພຣະອົງທັງຫລາຍ ຂ້າພຣະອົງທັງຫລາຍ ທັງບັນດາພຣະຣາ
ຊາຂອງຂ້າພຣະອົງ ແລະບັນດາປະໂຣຫິດຂອງຂ້າພຣະອົງທັງຫລາຍໄດ້ຖືກມອບໄວ້ໃນມືຂອງບັນດາພຣະ
ຣາຊາແຫ່ງແຜ່ນດິນເຫລົ່ານັ້ນ ໃຫ້ແກ່ດາບ ແກ່ການເປັນຊະເລີຍ ແກ່ການປຸ້ນ ແລະແກ່ການອົດສູຢ່າງທີ່
ສຸດ ຢ່າງທຸກວັນນີ້
8 ແຕ່ບັດນີ້ພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້າພຣະອົງທັງຫລາຍຊົງສຳແດງພຣະກະຣຸນາ ພໍພຣະທັຍຊົ່ວບຶດນຶ່ງ
ສັ້ນໆ ແລະໄດ້ຊົງປະທານໃຫ້ຂ້າພຣະອົງທັງຫລາຍມີຄົນທີ່ເຫລືອຢູ່ແລະມີທີ່ຍຶດຫມັ້ນໃນທີ່ບໍຣິສຸດຂອງພຣະ
ອົງ ເພື່ອວ່າພຣະເຈົ້າຂອງຂ້າພຣະອົງຈະໄດ້ຊົງໃຫ້ຕາຂອງຂ້າພຣະອົງທັງລາຍແຈ້ງ ພຣະອົງໄດ້ໂຜດໃຫ້
ຂ້າພຣະອົງທັງຫລາຍຫນີພົ້ນຈາກການເປັນທາດມາໄດ້ ແລະທັງໃຫ້ຂ້າພຣະອົງທັງຫລາຍມີຊີວິດໃຫມ່

9 ເພາະວ່າຂ້າພຣະອົງທັງຫລາຍເປັນທາດ ແຕ່ພຣະເຈົ້າຂອງຂ້າພຣະອົງບໍ່ໄດ້ຊົງປະປ່ອຍຂ້າພຣະອົງໄວ້ໃນ
ຄວາມເປັນທາດ ແຕ່ຊົງບັນດານໃຫ້ຂ້າພຣະອົງທັງຫລາຍມີຄວາມຊອບຕໍ່ພຣະພັກບັນດາພຣະຣາຊາແຫ່ງ
ເປີເຊັຽ ຊົງໃຫ້ຂ້າພຣະອົງທັງຫລາຍມີຊີວິດຢູ່ຕໍ່ໄປ ເພື່ອຈະຕັ້ງພຣະວິຫານຂອງພຣະເຈົ້າຂອງຂ້າພຣະອົງ
ທັງຫລາຍຂຶ້ນໄວ້ ເພື່ອຈະຊ່ອມທີ່ສະລັກຫັກພັງ ເພື່ອຈະປະທານກຳແພງແກ່ຂ້າພຣະອົງທັງຫລາຍໃນຢູດາ
ແລະໃນເຢຣູຊາເລັມ
10 "ແລະບັດນີ້ ຂ້າແດ່ພຣະເຈົ້າຂອງຂ້າພຣະອົງທັງຫລາຍ ຕໍ່ຈາກນີ້ຂ້າພຣະອົງຈະທູນສິ່ງໃດອີກ ເພາະຂ້າ
ພຣະອົງທັງຫລາຍໄດ້ປະຖິ້ມພຣະບັນຍັດຂອງພຣະອົງ
11 ຊຶ່ງພຣະອົງໄດ້ຊົງບັນຊາໄວ້ ໂດຍຜູ້ປະກາດພຣະທັມຜູ້ຮັບໃຊ້ຂອງພຣະອົງວ່າ "ແຜ່ນດິນຊຶ່ງເຈົ້າກຳລັງເຂົ້າ
ໄປເພື່ອຍຶດເປັນກຳມະສິດນັ້ນເປັນແຜ່ນດິນມົນທິນ ດ້ວຍເຫດຄວາມມົນທິນຂອງຊົນຊາດທັງຫລາຍແຫ່ງ
ແຜ່ນດິນເຫລົ່ານັ້ນ ດ້ວຍການຫນ້າກຽດຫນ້າຊັງຂອງເຂົາ ຊຶ່ງເຕັມໄປຫມົດຕັ້ງແຕ່ປາຍຂ້າງນີ້ເຖິງປາຍຂ້າງ
ນັ້ນ ດ້ວຍຄວາມມົນທິນຂອງເຂົາທັງຫລາຍ
12 ເພາະສະນັ້ນຢ່າມອບພວກລູກຍິງຂອງເຈົ້າແກ່ພວກບຸດຊາຍຂອງເຂົາ ຫລືຢ່າຮັບພວກລູກຍິງຂອງເຂົາໃຫ້
ພວກລູກຊາຍຂອງເຈົ້າ ຫລືຢ່າເສີມສວັດດີພາບແລະຄວາມຈະເຣີນມັ່ງຄັ່ງຂອງເຂົາທັງຫລາຍເປັນນິດ ເພື່ອ
ເຈົ້າທັງຫລາຍຈະແຂງແຮງແລະກິນຂອງດີໆແຫ່ງແຜ່ນດິນນັ້ນ ແລະມອບແຜ່ນດິນນັ້ນໄວ້ເປັນມໍຣະດົກແກ່
ລູກຫລານຂອງເຈົ້າທັງຫລາຍເປັນນິດ
13 ແລະເມື່ອຂ້າພຣະອົງທັງຫລາຍຮັບໂທດເພາະການຊົ່ວຮ້າຍຂອງຂ້າພຣະອົງ ແລະເພາະກັມຊົ່ວໃຫຍ່ຍິ່ງ
ຂອງຂ້າພຣະອົງ ແລະເມື່ອພຣະອົງ ຄືພຣະເຈົ້າຂອງຂ້າພຣະອົງທັງຫລາຍໄດ້ຊົງລົງໂທດຂ້າພຣະອົງ ເຫດ
ຄວາມບາບຊົ່ວຂອງຂ້າພຣະອົງນ້ອຍກວ່າທີ່ຄວນຈະໄດ້ຮັບ ແລະຊົງປະທານຄົນທີ່ເຫລືອຢູ່ແກ່ຂ້າພຣະອົງທັ
ງຫລາຍຢ່າງນີ້
14 ສົມຄວນທີ່ຂ້າພຣະອົງທັງຫລາຍຈະຫັກພຣະບັນຍັດຂອງພຣະອົງອີກ ແລະເຂົ້າແຕ່ງງານກັບຊົນຊາດທັງ
ຫລາຍຜູ້ປະພຶດສິ່ງຫນ້າກຽດຊັງເຫລົ່ານີ້ຫລື ພຣະອົງຈະບໍ່ຊົງກິ້ວຕໍ່ຂ້າພຣະອົງທັງຫລາຍຈົນພຣະອົງຜານ
ຂ້າພຣະອົງທັງຫລາຍເສັຽ ຈົນບໍ່ມີຄົນທີ່ເຫລືອຢູ່ ແລະບໍ່ມີຜູ້ໃດອົດໄດ້ເລີຍຫລື
15 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງອິສຣາເອນ ພຣະອົງຊອບທັມ ເພາະຂ້າພຣະອົງທັງຫລາຍຢູ່ຕໍ່ພຣະ
ພັກພຣະອົງ ມີກັມຊົ່ວຂອງຂ້າພຣະອົງຢູ່ ເພາະບໍ່ມີໃຜຈັກຄົນດຽວທີ່ຈະຢືນຢູ່ຕໍ່ພຣະພັກພຣະອົງໄດ້ເຫດ
ເຣື່ອງນີ້"

## 10. ການທີ່ຕ້ອງຖິ້ມເມັຽທີ່ຍິງຕ່າງຊາດແລະບຸດ

1 ຂນະທີ່ເອັຊຣາອ້ອນວອນ ແລະທຳການສາລະພາບຮ້ອງໄຫ້ຖິ້ມຕົວລົງຕໍ່ຫນ້າພຣະວິຫານຂອງພຣະເຈົ້າ ມີ
ຊຸມນຸມຊົນຫມູ່ໃຫຍ່ໂຕມາກມາຍທັງຊາຍຍິງແລະເດັກ ຈາກອິສຣາເອນປະຊຸມຕໍ່ຫນ້າທ່ານ ເພາະປະຊາຊົນ
ໄດ້ຮ້ອງໄຫ້ຢ່າງຂົມຂື່ນ

2 ແລະເຊການີຢາ ບຸດຂອງເຢຮີເອນ ເຊື້ອສາຍເອລາມກ່າວແກ່ເອັຊຣາວ່າ, “ພວກເຮົາທັງຫລາຍໄດ້ທໍຣະຍົດ
ຕໍ່ພຣະເຈົ້າຂອງເຮົາເສັຽແລ້ວ ແລະໄດ້ແຕ່ງງານກັບຍິງຕ່າງຊາດຈາກຊົນຊາດທັງຫລາຍຂອງແຜ່ນດິນນີ້
ແຕ່ເຖິງຈະມີເຣື່ອງຢ່າງນີ້ ກໍຍັງມີຄວາມຫວັງໃນອິສຣາເອນຢູ່
3 ເພາະສະນັ້ນ ໃຫ້ເຮົາກະທຳຄຳຫມັ້ນສັນຍາກັບພຣະເຈົ້າຂອງເຮົາທີ່ຈະຖິ້ມເມັຽ ແລະລູກເຫລົ່ານີ້ຊຶ່ງເກີດມາ
ຈາກເຂົາທັງຫລາຍເສັຽທັງສິ້ນ ຕາມຄຳປຶກສາຂອງເຈົ້ານາຍຂອງຂ້າພະເຈົ້າ ແລະຂອງບັນດາຜູ້ທີ່ສັ່ນສະ
ທ້ານດ້ວຍພຣະບັນຍັດຂອງພຣະເຈົ້າຂອງເຮົາທັງຫລາຍ ແລະຂໍໃຫ້ກະທຳຕາມກົດຫມາຍເຖີດ
4 ຈົ່ງລຸກຂຶ້ນເຖີດ ເພາະເປັນຫນ້າທີ່ຂອງທ່ານ ແລະເຮົາທັງຫລາຍສນັບສນຸນທ່ານ ຂໍຈົ່ງເຂັ້ມແຂງແລະກະທຳ
ເສັຽເຖີດ”
5 ແລ້ວເອັຊຣາໄດ້ລຸກຂຶ້ນໃຫ້ບັນດາປະໂຣຫິດໃຫຍ່ ແລະເລວີ ແລະອິສຣາເອນທັງປວງກະທຳສັດສາບານວ່າ
ເຂົາຈະກະທຳຕາມທີ່ໄດ້ເວົ້າແລ້ວ ເຂົາທັງຫລາຍຈຶ່ງກະທຳສັດສາບານ
6 ແລ້ວເອັຊຣາກໍຖອຍໄປຈາກຕໍ່ຫນ້າພຣະວິຫານຂອງພຣະເຈົ້າ ເຂົ້າໄປໃນຫ້ອງຂອງເຢໂຮຮານັນ ບຸດຂອງ
ເອລີອາຊິບ ເມື່ອມາເຖິງທີ່ນັ້ນແລ້ວກໍບໍ່ຮັບປະທານເຂົ້າຈີ່ ຫລືດື່ມນ້ຳ ເພາະທ່ານໂສກເສົ້າດ້ວຍເຣື່ອງພວກ
ຊະເລີຍທີ່ກັບມາໄດ້ທໍຣະຍົດ
7 ແລະເຂົາທຳການປ່າວຮ້ອງທົ່ວຢູດາ ແລະເຢຣູຊາເລັມ ແກ່ພວກຊະເລີຍທີ່ໄດ້ກັບມາທັງສິ້ນວ່າ ໃຫ້ມາຊຸມ
ນຸມກັນທີ່ເຢຣູຊາເລັມ
8 ແລະຖ້າຜູ້ໃດບໍ່ມາພາຍໃນສາມວັນ ຕາມຄຳສັ່ງຂອງເຈົ້າຫນ້າທີ່ ແລະພວກຜູ້ໃຫຍ່ທັງຫລາຍ ຈະຕ້ອງ
ຮິບສົມບັດຂອງເຂົາເສັຽທັງຫມົດ ແລະຜູ້ນັ້ນຈະຕ້ອງຂາດຈາກຊຸມນຸມຊົນຂອງພວກຊະເລີຍ
9 ແລະຊາຍທັງປວງຂອງຢູດາ ແລະເບັນຢາມິນໄດ້ຊຸມນຸມກັນທີ່ເຢຣູຊາເລັມພາຍໃນສາມວັນ (ໃນເດືອນທີ່
ເກົ້າ ໃນວັນທີ່ຊາວຂອງເດືອນນັ້ນ) ແລະປະຊາຊົນທັງປວງນັ່ງລົງທີ່ລານຫນ້າພຣະວິຫານຂອງພຣະເຈົ້າ
ຕົວສັ່ນສະທ້ານດ້ວຍເຣື່ອງນີ້ ແລະດ້ວຍເຣື່ອງຝົນຕົກຫນັກ
10 ແລະເອັຊຣາປະໂຣຫິດໄດ້ລຸກຂຶ້ນເວົ້າກັບເຂົາທັງຫລາຍວ່າ, “ທ່ານທັງຫລາຍໄດ້ລະເມີດ ແລະໄດ້ແຕ່ງງານ
ກັບຍິງຕ່າງຊາດ ຈຶ່ງໄດ້ທະວີກັມຊົ່ວຂອງອິສຣາເອນ
11 ເຫດສະນັ້ນ ຈົ່ງສາລະພາບຕໍ່ພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງບັນພະບຸຣຸດຂອງທ່ານ ແລະກະທຳຕາມນ້ຳ
ພຣະທັຍຂອງພຣະອົງ ຈົ່ງແຍກຕົວທ່ານອອກເສັຽຈາກຊົນຊາດທັງຫລາຍແຫ່ງແຜ່ນດິນ ແລະຈາກເມັຽຕ່າງ
ຊາດ”
12 ແລ້ວຊຸມນຸມທັງສິ້ນໄດ້ຕອບດ້ວຍສຽງອັນດັງວ່າ, “ເປັນດັ່ງນັ້ນແຫລະ ເຮົາຕ້ອງກະທຳຕາມທີ່ທ່ານເວົ້າແລ້ວ”
13 ແຕ່ມີປະຊາຊົນມາກມາຍ ແລະຝົນຕົກຫນັກ ພວກເຮົາຢູ່ກາງແຈ້ງບໍ່ໄຫວ ແລະຈະຈັດໃຫ້ແລ້ວໃນມື້ສອງມື້
ກໍບໍ່ໄດ້ ເພາະເຮົາໄດ້ລະເມີດໃນເຣື່ອງນີ້ມາກນັກ

www.laochristian.org

14 ຂໍໃຫ້ເຈົ້າຫນ້າທີ່ຂອງເຮົາທຳການແທນຊຸມນຸມຊົນທັງສິ້ນ ແລະໃຫ້ບັນດາຄົນໃນຫົວເມືອງຂອງເຮົາທີ່ໄດ້ຮັບ
ເມັຽຕ່າງຊາດມາຕາມເວລາກຳນົດ ພ້ອມກັບພວກຜູ້ໃຫຍ່ແລະຜູ້ຕັດສິນຂອງທຸກເມືອງ ຈົນກວ່າພຣະພິໂຣດ
ອັນແຮງກ້າຂອງພຣະເຈົ້າຂອງເຮົາ ທີ່ຊົງມີໃນເຣື່ອງນີ້ຫັນຫນີໄປຈາກເຮົາທັງຫລາຍ”
15 ໂຢນາທານ ບຸດຂອງອາຊາເຮນ ແລະຢາຊັຍຢາ ບຸດຂອງຕິກວາເທົ່ານັ້ນທີ່ຄັດຄ້ານເຣື່ອງນີ້ ແລະເມຊູນ
ລາມ ແລະຊາບເບທັຍ ຊົນເລວີສນັບສນຸນເຂົາທັງສອງ
16 ແລ້ວພວກທີ່ຖືກກວາດໄປເປັນຊະເລີຍ ຊຶ່ງກັບມາກໍໄດ້ກະທຳຕາມ ເອັຊຣາປະໂຣຫິດ ແລະຫົວຫນ້າຂອງ
ຕະກູນຕາມຕະກູນຂອງເຂົາ ແຕ່ລະຄົນທີ່ລະບຸຊື່ໄວ້ໄດ້ຖືກເລືອກ ໃນວັນທີ່ນຶ່ງຂອງເດືອນທີ່ສິບ ເຂົານັ່ງປະ
ຊຸມກັນພິຈາຣະນາເຣື່ອງນີ້
17 ພໍເຖິງວັນທີ່ນຶ່ງຂອງເດືອນທີ່ນຶ່ງ ເຂົາກໍຈົບເຣື່ອງທີ່ຊາຍທັງປວງໄດ້ແຕ່ງງານກັບຍິງຕ່າງຊາດ
18 ເຊື້ອສາຍຂອງປະໂຣຫິດຜູ້ໄດ້ແຕ່ງງານກັບຍິງຕ່າງຊາດ ຈາກເຊື້ອສາຍເຢຊູອາ ບຸດຂອງໂຢຊາດັກແລະພີ່
ນ້ອງຂອງທ່ານ ມີ ມາອາຊັຍຢາ ເອບີເອເຊີ ຢາຣິບ ແລະເກດາລີຢາ
19 ເຂົາທັງຫລາຍສາບານຕົນວ່າ ເຂົາຈະຖິ້ມເມັຽຂອງເຂົາເສັຽ ແລະເຄື່ອງບູຊາໄຖ່ກັມຊົ່ວຂອງເຂົາ ຄືແກະ
ເຖິກຕົວນຶ່ງຈາກຝູງແບ້ແກະ ເພື່ອຊຳຮະກັມຊົ່ວຂອງເຂົາ
20 ຈາກເຊື້ອສາຍຂອງອິມເມີ ມີ ຮານານີ ແລະເຊບາດີຢາ
21 ຈາກເຊື້ອສາຍຂອງຮາຣິມ ມີ ມາອາຊັຍຢາ ເອລີຢາ ເຊມັຍຢາ ເຢຮີເອນ ແລະອຸສຊີຢາ
22 ຈາກເຊື້ອສາຍຂອງປັສເຮີ ມີ ເອລີໂອອີນັຍ ມາອາຊັຍຢາ ອິຊມາເອນ ເນທານເອນ ໂຢຊາບັດ ແລະເອ
ລາຊາ
23 ຈາກພວກຊົນເລວີ ມີ ໂຢຊາບັດ  ຊີເມອີ ເກລັຍຢາ (ຄື ເກລີຕາ) ເປທາຮີຢາ ຢູດາ ແລະເອລີເອເຊີ
24 ຈາກພວກນັກຮ້ອງ ມີ ເອລີອາຊິບ ຈາກຄົນເຝົ້າປະຕູ ມີ ຊັນລູມ ເຕເລມ ແລະອູຣີ
25 ແລະຈາກພວກອິສຣາເອນ ຄືຈາກເຊື້ອສາຍຂອງປາໂຣສ ມີ ຣາມີຢາ ອິສຊີຢາ ມັນຄີຢາ ມີຢາມິນ ເອເລ
ອາຊາ ຮາຊາບີຢາ ແລະເບນັຍຢາ
26 ຈາກເຊື້ອສາຍຂອງເອລາມ ມີ ມັດຕານີຢາ ເຊຄາຣີຢາ ເຢຮີເອນ ອັບດີ ເຢຣີໂມທ ແລະເອລີຢາ
27 ຈາກເຊື້ອສາຍຂອງຊັດຕູ  ມີ ເອລີໂອເອນັຍ ເອລີອາຊິບ ມັດຕານີຢາ ເຢເຣໂມທ ຊາບາດ ແລະອາຊີຊາ
28 ຈາກເຊື້ອສາຍຂອງເບບັຍ ມີ ເຢໂຮຮານານ ຮານານີຢາ ຊັບບັຍ ແລະ ອັທລັຍ
29 ຈາກເຊື້ອສາຍຂອງບານີ ມີ ເມຊູນລາມ ມັນລຸກ ອາດັຍຢາ ຢາຊູບ ເຊອານ ແລະເຢເຣໂມທ
30 ຈາກເຊື້ອສາຍຂອງປາຮັທໂມອາບ ມີ ອັດນາ ເຄລັຍ ເບນາອີຢາ ເມອາຊັຍຢາ ມັດຕານີຢາ ເບຊາເລນ
ບິນນູອີ ແລະມານັສເຊ
31 ຈາກເຊື້ອສາຍຂອງຮາຣິມ ມີ ເອລີເອເຊີ ອິສຊີຢາ ມັນຄີຢາ ເຊມັຍຢາ ຊີເມໂອນ
32 ເບັນຢາມິນ ມັນລັກ ແລະເຊມາຣີຢາ

33 ຈາກເຊື້ອສາຍຂອງຮາຊູມ ມີ ມັດເຕນັຍ ມັດຕັດຕາ ຊາບາດ ເອລີຟາເລທ ເຢເຣມັຍ ມານັສເຊ ແລະຊີເມອີ

34 ຈາກເຊື້ອສາຍຂອງບານີ ມີ ມາອາດາອີ ອັມຣາມ ອູເອນ

35 ເບນາອີຢາ ເບດັຍຢາ ເຄລູຮີ

36 ວານີຢາ ເມເຣໂມທ ເອລີອາຊີບ

37 ມັດຕານີຢາ ມັດເຕຣັຍ ແລະຢາອາຊູ

38 ຈາກເຊື້ອສາຍຂອງບິນນູອີ ຊີເມອີ

39 ເຊເລມີຢາ ນາທານ ອາດັຍຢາ

40 ມັສນາເດບັຍ ຊາຊັຍ ຊາຣັຍ

41 ອາຊາເຣນ ເຊເລມີຢາ ເຊມາຣີຢາ

42 ຊັນລູມ ອາມາຣີຢາ ແລະໂຢເຊັບ

43 ຈາກເຊື້ອສາຍຂອງເນໂບ ມີ ເຢອີເອນ ມັດຕີທີຢາ ຊາບາດ ເຊບີນາ ຊັດດັຍ ໂຢເອນ ແລະເບນາອີຢາ

44 ບຸກຄົນເຫລົ່ານີ້ທັງສິ້ນໄດ້ແຕ່ງງານກັບຍິງຕ່າງຊາດ ບາງຄົນມີລູກເກີດຈາກເມັຽເຫລົ່ານັ້ນດ້ວຍ